## ຄວາມຮູ້ເບື້ອງຕົ້ນກ່ຽວກັບ

# ກອບການດຳເນີນງານຂອງການມີສ່ວນຮ່ວມ, ການດຳເນີນການ ແລະ ການປຶກສາຫາລືໃນລະດັບທ້ອງຖິ່ນ



EarthRights International

## ຄວາມຮູ້ເບື້ອງຕົ້ນກ່ຽວກັບ ກອບການດຳເນີນງານຂອງການມີສ່ວນຮ່ວມ, ການດຳເນີນການ ແລະ ການປຶກສາຫາລືໃນລະດັບທ້ອງຖິ່ນ

# ສາລະບານ


ບົດນຳ ແລະ ຄວາມເປັນມາ 1

**1.** ວິທີການດຳເນີນງານ LEAD 2
- 1.1 LEAD ແມ່ນຫຍັງ? 2
- 1.2 ເປັນຫຍັງຈຶ່ງນຳໃຊ້ກອບການດຳເນີນງານ LEAD? 2
- 1.3 ຄ່ານິຍົມຫຼັກ 3
- 1.4 ຜູ້ດຳເນີນການ LEAD 4

**2.** ສາມພື້ນທີ່ຂອງ "ການສ້າງ" ໃນກອບການດຳເນີນງານຂອງ LEAD 4
- 2.1 ບັນດາເຄື່ອງມືທີ່ໄດ້ຮັບການຮັບຮອງຈາກ LEAD 5
- 2.2 ການສ້າງຄວາມເຊື່ອໝັ້ນ 7
- 2.3 ການສ້າງຊຸມຊົນ 8
- 2.4 ການສ້າງໂຄສະນາເຜີຍແຜ່ (ແຄມເປນ) 11

**3.** ວິທີການຂອງ LEAD ແລະ ສິດທິມະນຸດ 14

**4.** ການນຳໃຊ້ກອບການດຳເນີນງານນີ້ 16

# ບົດນໍາ ແລະ ຄວາມເປັນມາ

ອົງການ EarthRights ເຮັດວຽກເພື່ອຢຸດຕິການລ່ວງລະເມີດທາງດ້ານສິດທິມະນຸດ ແລະ ຄວາມບໍ່ຍຸດຕິທໍາທາງດ້ານສະພາບອາກາດ ໂດຍການປ່ຽນອໍານາດກັບຄືນໄປໃຫ້ຊຸມຊົນທີ່ຢູ່ແຖວໜ້າ. ອົງການ EarthRights ເຊື່ອວ່າ ຊຸມຊົນຕ້ອງເປັນຈຸດສູນກາງຂອງການດໍາເນີນການ ແລະ ໂຄສະນາເຜີຍແຜ່ເພື່ອປົກປ້ອງສິດທິມະນຸດຂອງພວກເຂົາ ແລະ ເອົາຄວາມຮັບຜິດຊອບໄປໃຫ້ກັບບັນດາບໍລິສັດຂ້າມປະເທດ ແລະ ລັດຖະບານທີ່ໄດ້ລະເມີດເຖິງສິດເຫຼົ່ານັ້ນ. ເພື່ອສະໜັບສະໜູນຄວາມພະຍາຍາມເຫຼົ່ານັ້ນ, ອົງການ EarthRights, ໂດຍຜ່ານທີມໂຄສະນາເຜີຍແຜ່ (ແຄມເປນ), ທີມກົດໝາຍ ແລະ ທີມຝຶກອົບຮົມ, ເຊິ່ງໄດ້ເຮັດວຽກຄຽງຄູ່ໄປກັບຊຸມຊົນ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດໂຄສະນາເຜີຍແຜ່, ສົ່ງເສີມ ແລະ ການປະຕິບັດທາງດ້ານກົດໝາຍ ແລະ ໂຄງການຝຶກອົບຮົມທີ່ມີປະສິດທິພາບ. ກິດຈະກໍາເຫຼົ່ານີ້ໄດ້ດຶງໃສ່ ແລະ/ຫຼື ພັດທະນາບັນດາເຄື່ອງມື ແລະ ຍຸດທະສາດຕ່າງໆ ເພື່ອຊ່ວຍຊຸມຊົນໃນຄວາມພະຍາຍາມຂອງພວກເຂົາເຫຼົ່ານັ້ນ.

ກອບການດໍາເນີນງານ**ການມີສ່ວນຮ່ວມ, ການດໍາເນີນການ ແລະ ການປຶກສາຫາລືໃນລະດັບທ້ອງຖິ່ນ (LEAD)** ມີຈຸດປະສົງເພື່ອບັນທຶກວິທີການເຮັດວຽກ ໂດຍເອົາຊຸມຊົນເປັນສູນກາງຂອງອົງການ EarthRights ແລະ ເພື່ອເຊື່ອມໂຍງຍຸດທະສາດ ແລະ ເຄື່ອງມືທີ່ນໍາພາໂດຍຊຸມຊົນທີ່ແຕກຕ່າງກັນ ທີ່ອົງການ EarthRights ແລະ ຄູ່ຮ່ວມງານໃຊ້ເຂົ້າໄປໃນຄວາມຮູ້ເບື້ອງຕົ້ນກ່ຽວກັບການມີສ່ວນຮ່ວມ, ການດໍາເນີນການ ແລະ ການປຶກສາຫາລືໃນລະດັບທ້ອງຖິ່ນ (LEAD) ແລະ ຊຸດຄູ່ມືຜູ້ນໍາໃຊ້ສໍາລັບເຄື່ອງມືທີ່ໄດ້ຮັບການຮັບຮອງຈາກ LEAD. ໃນການນໍາເອົາວຽກງານເຫຼົ່ານີ້ມາລວມກັນ, ເອກະສານເຫຼົ່ານີ້ ແມ່ນມີຈຸດປະສົງເພື່ອໃຫ້ທີມງານ ແລະ ຄູ່ຮ່ວມງານຂອງອົງການ EarthRights ສາມາດສະໜັບສະໜູນຊຸມຊົນໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນ ໂດຍການສະໜອງຊັບພະຍາກອນສໍາລັບການກໍານົດ ແລະ ນໍາໃຊ້ຍຸດທະສາດ, ກິດຈະກໍາ ແລະ ເຄື່ອງມືທີ່ກ່ຽວຂ້ອງຫຼາຍທີ່ສຸດ ສໍາລັບການມີສ່ວນຮ່ວມຂອງຜູ້ທີ່ກ່ຽວຂ້ອງ ແລະ ການດໍາເນີນການຂອງຊຸມຊົນໃນທຸກຂັ້ນຕອນຂອງກິດຈະກໍາທາງທຸລະກິດ ຫຼື ໂຄງການພັດທະນາຕ່າງໆ.

ເອກະສານດັ່ງຕໍ່ໄປນີ້ໄດ້ສະຫຼຸບກອບການດໍາເນີນງານຂອງ LEAD ແລະ ໄດ້ແນະນໍາເຄື່ອງມືທີ່ໃຊ້ເພື່ອສະໜັບສະໜູນຂະບວນການທີ່ນໍາພາໂດຍຊຸມຊົນ.



# 1. ວິທີການດຳເນີນງານ LEAD

## 1.1 LEAD ແມ່ນຫຍັງ?

LEAD ແມ່ນກອບການເຮັດວຽກທີ່ມີຈຸດປະສົງເພື່ອເກັບກຳຮວບຮວມເອົາວິທີການທາງຊຸມຊົນເປັນສູນກາງຂອງ ອົງການ EarthRights ໃນການສ້າງໂຄສະນາເຜີຍແຜ່, ການສົ່ງເສີມທາງດ້ານກົດໝາຍ ແລະ ການຝຶກອົບຮົມ. ສະຫຼຸບວິທີການສະໜັບສະໜູນວຽກໂຄສະນາເຜີຍແຜ່ທີ່ນຳພາຂອງຊຸມຊົນ, ໂດຍການຊ່ວຍເຫຼືອຊຸມຊົນດັ່ງນີ້:

- ເຂົ້າໃຈເຖິງສິດ ແລະ ພາລະໜ້າທີ່ຂອງພວກເຂົາ ລວມທັງສອງພາກສ່ວນກໍຄື ຜູ້ປະຕິບັດທັງເອກະຊົນ ແລະ ລັດຖະບານໃນການເຄົາລົບສິດເຫຼົ່ານັ້ນ;
- ກຳນົດການດຳເນີນການທີ່ພວກເຂົາສາມາດປະຕິບັດໄດ້ເພື່ອປ້ອງກັນ ແລະ ປົກປ້ອງສິດເຫຼົ່ານັ້ນ;
- ພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດທີ່ສາມາດເສີມສ້າງການດຳເນີນການເຫຼົ່ານັ້ນ ໃຫ້ແກ່ວຽກງານການການສ້າງໂຄສະນາເຜີຍແຜ່ທີ່ນຳພາໂດຍຊຸມຊົນທີ່ເຂັ້ມແຂງ; ແລະ
- ເພີ່ມຄວາມໝັ້ນໃຈໃນການເປັນຜູ້ນຳໃນການປ້ອງກັນ ແລະ ປົກປ້ອງຊຸມຊົນຂອງພວກເຂົາໃນໄລຍະຍາວ.

ກອບການດຳເນີນງານຂອງ LEAD ໄດ້ໃຫ້ຂໍ້ມູນກ່ຽວກັບຂະບວນການສ້າງຊຸມຊົນເປັນສູນກາງ, ເພື່ອສ້າງຄວາມເຊື່ອໝັ້ນ, ສະໜັບສະໜູນການສ້າງຊຸມຊົນ ແລະ ສ້າງການໂຄສະນາເຜີຍແຜ່ທີ່ເຂັ້ມແຂງ. ເປັນແຫຼ່ງດຽວທີ່ຊຸມຊົນ ແລະ ຄູ່ຮ່ວມງານທີ່ສະໜັບສະໜູນ ສາມາດເຂົ້າເຖິງແນວຄວາມຄິດການພັດທະນາຍຸດທະສາດ ແລະ ເຄື່ອງມືສະເພາະ, ເພື່ອຊ່ວຍເພີ່ມຄວາມໝັ້ນໃຈ ແລະ ທັກສະໃນການປົກປ້ອງສິດຂອງພວກເຂົາໄດ້ດີຍິ່ງຂຶ້ນ.

ເນື່ອງຈາກວ່າວິທີການຂອງ LEAD ແມ່ນສຸມໃສ່ຊຸມຊົນເປັນສູນກາງ, ແຫຼ່ງຂໍ້ມູນນີ້ຈິ່ງບໍ່ແມ່ນຊຸດຄຳແນະນຳ ຫຼື ກົດລະບຽບທີ່ຕາຍຕົວ, ແຕ່ເປັນລາຍການທາງເລືອກທີ່ອາດຈະເປັນປະໂຫຍດຕໍ່ຊຸມຊົນ. ກິດຈະກຳ ແລະ ເຄື່ອງມືຕ້ອງໄດ້ຮັບການປັບໃຫ້ເຂົ້າກັບແຕ່ລະສະພາບການ, ແລະ ຊຸມຊົນຈະເປັນຜູ້ຕັດສິນໃຈເອງວ່າ ວິທີໃດມີຄວາມກ່ຽວຂ້ອງ ແລະ ເປັນປະໂຫຍດຫຼາຍທີ່ສຸດ. ເມື່ອເປົ້າໝາຍຂອງຊຸມຊົນມີການປ່ຽນແປງ, ຍຸດທະສາດ, ຂະບວນການ ແລະ ເຄື່ອງມືສະເພາະຈະຖືກປັບປ່ຽນ ແລະ ເພີ່ມເຂົ້າເພື່ອໃຫ້ສອດຄ່ອງກັບການປ່ຽນແປງເຫຼົ່ານັ້ນດ້ວຍ.

## 1.2 ເປັນຫຍັງຈຶ່ງນຳໃຊ້ກອບການດຳເນີນງານ LEAD?

ການນຳໃຊ້ກອບການດຳເນີນງານ LEAD ມີຢູ່ 02 ຈຸດປະສົງ ຄື: ຈຸດປະສົງທຳອິດແມ່ນ, ໃຫ້ແນວຄວາມຄິດ ແລະ ເຄື່ອງມືສະເພາະທີ່ອາດເປັນປະໂຫຍດສຳລັບການພັດທະນາຍຸດທະສາດໃນບັນດາການສົ່ງເສີມ, ກົດໝາຍ ຫຼື ການໂຄສະນາເຜີຍແຜ່. ຜົນໄດ້ຮັບຈາກເຄື່ອງມືໃນກອບການດຳເນີນງານຂອງ LEAD ນີ້ ເປັນສິ່ງທີ່ເປັນຮູບປະທຳ ທີ່ຊຸມຊົນອາດຈະນຳໃຊ້ສຳລັບການປະຕິບັດການໂຄສະນາເຜີຍແຜ່ (ແຄມເປນ), ກິດຈະກຳການມີສ່ວນຮ່ວມ ຫຼື ການດຳເນີນການທາງດ້ານກົດໝາຍ. ຈຸດປະສົງທີສອງແມ່ນ, ຂະບວນການນີ້ຊ່ວຍພັດທະນາ ແລະ ຂະຫຍາຍທັກສະ, ຄວາມສາມາດ ແລະ ຄວາມສົນໃຈທີ່ຈະຊ່ວຍໃຫ້ຊຸມຊົນມີສ່ວນຮ່ວມໂດຍກົງ ແລະ ມີຄວາມໝາຍໃນຍຸດທະສາດສະເພາະຂອງພວກເຂົາ, ເຊັ່ນດຽວກັນກັບການນຳໃຊ້ທັກສະ ແລະ ຄວາມໝັ້ນໃຈທີ່ເພີ່ມຂຶ້ນເພື່ອປົກປ້ອງ ແລະ ປ້ອງກັນຊຸມຊົນຂອງພວກເຂົາໃນໄລຍະຍາວ.

ການແນໃສ່ຊຸມຊົນເປັນສູນກາງຂອງກອບການດຳເນີນງານຂອງ LEAD ແມ່ນຍຶນດີຮັບເອົາ ແລະ ຂະຫຍາຍອຳນາດ ແລະ ຄວາມຮູ້ທີ່ຊຸມຊົນມີຢູ່ແລ້ວ. ສິ່ງນີ້ຈະຊ່ວຍປ່ຽນຄວາມບໍ່ດຸນດ່ຽງຂອງອຳນາດທີ່ມັກຈະເກີດຂຶ້ນລະຫວ່າງຊຸມຊົນ ແລະ ຜູ້ດຳເນີນການອື່ນໆທີ່ກ່ຽວຂ້ອງກັບໂຄງການ, ເຊັ່ນ ບັນດາບໍລິສັດ ແລະ ລັດຖະບານ.

ກອບການດຳເນີນງານຂອງ LEAD ແມ່ນມີຄວາມດັດປັບງ່າຍ ແລະ ສາມາດປັບປ່ຽນໄດ້, ເຊິ່ງຈະເປັນປະໂຫຍດສຳລັບຊຸມຊົນທີ່ແຕກຕ່າງກັນ, ແລະບາງຄັ້ງ ກໍມີສະພາບການທາງດ້ານການເມືອງທີ່ລະອຽດອ່ອນ ແລະ ທ້າທາຍ. ຊ່ວຍໃຫ້ຊຸມຊົນມີກິດຈະກຳປະຕິບັດທາງຍຸດທະສາດ ແລະ ເຄື່ອງມືທີ່ເປັນປະໂຫຍດສຳລັບການສົ່ງເສີມ ແລະ ເປົ້າໝາຍການໂຄສະນາເຜີຍແຜ່ໃດໆທີ່ພວກເຂົາມີ, ເພື່ອຊ່ວຍໃຫ້ພວກເຂົາພັດທະນາຍຸດທະສາດໄດ້ຢ່າງມີປະສິດທິພາບ ແລະ ສົ່ງເສີມຕົນເອງຢ່າງມີປະສິດທິພາບໃຫ້ຫຼາຍຂຶ້ນ. ຄວາມດັດປັບງ່າຍນີ້, ຍັງໝາຍຄວາມວ່າ ສາມາດໃຊ້ເຄື່ອງມື ແລະ ກິດຈະກຳແຍກກັນຕ່າງຫາກ ຫຼື ໃຊ້ຮ່ວມກັນໄດ້, ແລະ ວິທີການດັ່ງກ່າວ ຈະຍັງຄົງມີປະໂຫຍດເມື່ອເປົ້າໝາຍຂອງຊຸມຊົນມີການປ່ຽນໄປ.

## 1.3 ຄ່ານິຍົມຫຼັກ

ເພື່ອໃຫ້ສອດຄ່ອງກັບວິທີການເອົາຊຸມຊົນເປັນສູນກາງທີ່ອົງການ EarthRights ໄດ້ດຳເນີນການເຮັດວຽກນັ້ນ, ກອບການດຳເນີນງານຂອງ LEAD ຈຶ່ງມີສູນກາງທີ່ຄ່ານິຍົມຫຼັກບາງຢ່າງຄື:

- **ວາງຊຸມຊົນໃຫ້ເປັນສູນກາງ.** ຊຸມຊົນ ແມ່ນແຫຼ່ງຄວາມຮູ້ທີ່ສຳຄັນ, ເປັນໂຕຂັບເຄື່ອນໃນການປ່ຽນແປງ ແລະ ເປັນຜູ້ມີອຳນາດໃນການຕັດສິນໃຈ. ຄູ່ຮ່ວມງານທີ່ສະໜັບສະໜູນ ຄວນເຫັນວ່າພວກເຂົາມີບົດບາດໃນຖານະເປັນພັນທະມິດ, ບໍ່ແມ່ນເປັນຜູ້ນຳ.
- **ການນຳໃຊ້ໂຄງສ້າງທີ່ມີຢູ່ແລ້ວ ແລະ ສົ່ງເສີມການມີສ່ວນຮ່ວມ.** ຍຸດທະສາດທີ່ເລືອກ ຄວນເລີ່ມຕົ້ນ ແລະ ສ້າງຈາກຄວາມຮູ້ແບບດັ້ງເດີມ ແລະ ຂະບວນການໃນການຕັດສິນໃຈທີ່ຊຸມຊົນມີ ແລະ ນຳໃຊ້ຢູ່ແລ້ວ. ພ້ອມດຽວກັນນັ້ນ, ກໍຄວນຊຸກຍູ້ ແລະ ສະໜັບສະໜູນການມີສ່ວນຮ່ວມຈາກຊຸມຊົນ. ເຊິ່ງໝາຍເຖິງການເຮັດວຽກເພື່ອມີສ່ວນຮ່ວມກັບກຸ່ມຄົນທີ່ຫຼາກຫຼາຍພາຍໃນຊຸມຊົນ ແລະ ຊ່ວຍຂະຫຍາຍສຽງທັງໝົດ, ໂດຍສະເພາະຜູ້ທີ່ມັກຈະຖືກເບິ່ງຂ້າມ.
- **ຄຳໝັ້ນສັນຍາໃນໄລຍະຍາວ.** ການສະໜັບສະໜູນບໍ່ໄດ້ຂຶ້ນຢູ່ກັບໂຄງການ ແລະ ຈະບໍ່ຢຸດເຊົາເມື່ອກິດຈະກຳການໂຄສະນາເຜີຍແຜ່ (ແຄມເປນ) ນັ້ນໆສິ້ນສຸດລົງ. ຄູ່ຮ່ວມງານຄວນໃຫ້ຄຳໝັ້ນສັນຍາວ່າຈະໃຫ້ການສະໜັບສະໜູນໃນໄລຍະຍາວ, ໂດຍຈະຖອຍກັບຄືນກໍຕໍ່ເມື່ອຊຸມຊົນນັ້ນບໍ່ຕ້ອງການພວກເຂົາອີກຕໍ່ໄປແລ້ວ.
- **ບູລິມະສິດໃຫ້ກັບຄວາມປອດໄພ, ຄວາມໝັ້ນຄົງປອດໄພ ແລະ ການເປັນຢູ່ທີ່ດີຂອງຊຸມຊົນມາເປັນອັນດັບໜຶ່ງ.** ການສົ່ງເສີມຮຽກຮ້ອງສິດ ອາດເຮັດໃຫ້ຊຸມຊົນຕົກຢູ່ໃນຄວາມສ່ຽງ ແລະ ສາມາດລົບກວນວິຖີຊີວິດຂອງພວກເຂົາໄດ້ໃນຫຼາຍວິທີ. Earthrights defenders (ERDs) ຫຼື ນັກປົກປ້ອງສິດ ກໍມີຄວາມສ່ຽງສູງໃນຂະນະທີ່ປະຕິບັດວຽກງານຂອງພວກເຂົາເຊັ່ນກັນ. ການພັດທະນາຍຸດທະສາດດ້ວຍກອບການດຳເນີນງານຂອງ LEAD ຈະຕ້ອງໄດ້ຄຳນຶງເຖິງຄວາມສ່ຽງໃນແຕ່ລະສະພາບການ, ຕະຫຼອດຈົນຜົນກະທົບທີ່ອາດມີຕໍ່ຊີວິດປະຈຳວັນຂອງຄົນທົ່ວໄປ, ຊ່ວຍໃຫ້ຊຸມຊົນສາມາດກຳນົດວິທີການທີ່ດີທີ່ສຸດເພື່ອນຳທາງບັນຫາເຫຼົ່ານັ້ນ ແລະ ໃຫ້ການສະໜັບສະໜູນຫາກເກີດມີບັນຫາຂຶ້ນ.

## 1.4 ຜູ້ດຳເນີນການ LEAD

ເພື່ອໃຫ້ສອດຄ່ອງກັບຄ່ານິຍົມຫຼັກໃນຂ້າງເທິງນີ້, ບົດບາດຂອງຄູ່ຮ່ວມງານເຊັ່ນວ່າອົງການ EarthRights ແມ່ນເພື່ອສະໜັບສະໜູນ ຊຸມຊົນໃນຄວາມພະຍາຍາມຂອງພວກເຂົາ. ມັນບໍ່ແມ່ນເປັນການສັ່ງ ຫຼື ເຮັດໜ້າທີ່ເປັນຜູ້ມີອຳນາດໃນການຕັດສິນໃຈ. ຄວາມປອດໄພ ແລະ ຄວາມໝັ້ນຄົງປອດໄພຂອງຊຸມຊົນຈະຕ້ອງເປັນບູລິມະສິດອັນດັບໜຶ່ງ.

ເພື່ອສະໜັບສະໜູນການພັດທະນາຍຸດທະສາດຮ່ວມກັບຊຸມຊົນຢ່າງມີປະສິດທິພາບ, ອົງການ EarthRights ແລະ ຄູ່ຮ່ວມງານທີ່ໃກ້ຊິດ ມີໜ້າທີ່ຮັບຜິດຊອບໃນການເຮັດຄວາມເຂົ້າໃຈກ່ຽວກັບບັນດາເຄື່ອງມື ແລະ ກິດຈະກຳຕ່າງໆ ທີ່ລວມຢູ່ໃນກອບການດຳເນີນງານຂອງ LEAD. ສິ່ງນີ້ຈະຊ່ວຍໃຫ້ຊຸມຊົນສາມາດກຳນົດ ແລະ ປັບປຸງເປົ້າໝາຍຂອງພວກເຂົາເພື່ອໄປສູ່ຍຸດທະສາດທີ່ເຂັ້ມແຂງ. ການຊ່ວຍເຫຼືອເພີ່ມເຕີມຈາກ ຄູ່ຮ່ວມງານອື່ນໆທີ່ມີປະສົບການໃນດ້ານຍຸດທະສາດ ຫຼື ເຄື່ອງມືສະເພາະທີ່ອາດໄດ້ຮັບຄວາມຊ່ວຍເຫຼືອຖ້າຫາກມັນເປັນປະໂຫຍດ.

ການຄຸ້ມຄອງຄວາມໂປ່ງໃສ ແລະ ຄວາມຄາດຫວັງກໍມີຄວາມສຳຄັນເຊັ່ນດຽວກັນ. ເນື່ອງຈາກວ່າເຄື່ອງມືເຫຼົ່ານີ້ຈະຖືກນຳພາ ແລະ ດຳເນີນການໂດຍຊຸມຊົນເອງ, ຄູ່ຮ່ວມງານຈະຕ້ອງມີຄວາມຊັດເຈນກ່ຽວກັບຄຳໝັ້ນສັນຍາດ້ານໄລຍະເວລາ ແລະ ລະດັບຂອງໜ້າວຽກທີ່ຈຳເປັນ ໃນການນຳເອົາເຄື່ອງມື ແລະ ກິດຈະກຳທີ່ເລືອກ ໂດຍຊຸມຊົນໄປນຳໃຊ້. ພວກເຂົາຄວນຈະປຶກສາຫາລືຢ່າງເປີດເຜີຍກ່ຽວກັບທ່າແຮງຂອງເຄື່ອງມືແຕ່ລະຊະນິດ, ຕະຫຼອດຮອດຂໍ້ຈຳກັດຂອງເຄື່ອງມືນັ້ນໆ. ແຕ່ສິ່ງສຳຄັນກໍຄື ຕ້ອງຊັດເຈນວ່າ ບໍ່ມີເຄື່ອງມືໃດທີ່ສາມາດຮັບປະກັນເຖິງຄວາມສຳເລັດໄດ້.



# 2. ສາມພື້ນທີ່ຂອງ “ການສ້າງ” ໃນກອບການດຳເນີນງານຂອງ LEAD



ກອບການດຳເນີນງານຂອງ LEAD ແມ່ນແນໃສ່ຂະບວນການຂອງ "ການສ້າງ" ເຊັ່ນ: ການສ້າງຄວາມເຊື່ອໝັ້ນ, ການສ້າງຊຸມຊົນ ແລະ ການສ້າງການໂຄສະນາເຜີຍແຜ່ (ແຄມເປນ). ຂະບວນການຕ່າງໆເຫຼົ່ານີ້ ສາມາດຈິນຕະນາການເປັນຄ້າຍໆຄືກັບສວນ, ເຊັ່ນ ບ່ອນທີ່ເປັນຮາກໄມ້ ກໍປຽບເໝືອນ ຍຸດທະສາດ, ເຄື່ອງມື ແລະ ກິດຈະກຳ; ແລະ ດອກໄມ້ ກໍປຽບເໝືອນ ເປົ້າໝາຍ. ດ້ວຍການມີຮາກໄມ້ທີ່ແຂງແຮງ, ດອກໄມ້ກໍຈະມີໂອກາດຈະເລີນເຕີບໂຕໄດ້ດີກວ່າ. ດອກໄມ້ໃນເອກະສານສະບັບນີ້ ປຽບເໝືອນເປົ້າໝາຍອັນໃຫຍ່ກວ້າງ, ແຕ່ເມື່ອນຳເອົາໄປໃຊ້, ເປົ້າໝາຍເຫຼົ່ານັ້ນຈະເປັນເປົ້າໝາຍສະເພາະທີ່ຊຸມຊົນເປັນຄົນກຳນົດເອງ.

ຈຸດປະສົງຂອງການສ້າງຄວາມເຊື່ອໝັ້ນ ຄືການສ້າງຄວາມເຊື່ອໝັ້ນລະຫວ່າງຊຸມຊົນ ແລະ ການສະໜັບສະໜູນຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs), ເພື່ອພັດທະນາສາຍພົວພັນໃຫ້ເຂັ້ມແຂງ, ຍືນຍົງ ແລະ ເທົ່າທຽມກັນ. ຈຸດປະສົງຂອງການສ້າງຊຸມຊົນຄືການສະໜັບສະໜູນຊຸມຊົນໃນການພັດທະນາຄວາມສົນໃຈ, ຄວາມສາມັກຄີ ແລະ ທັກສະໃນການກຳນົດເປົ້າໝາຍ, ຕະຫຼອດຮອດຍຸດທະສາດເພື່ອການບັນລຸເປົ້າໝາຍເຫຼົ່ານັ້ນ. ຈຸດປະສົງຂອງການສ້າງການໂຄສະນາເຜີຍແຜ່ (ແຄມເປນ) ຄື ການສະໜັບສະໜູນຊຸມຊົນໃນການພັດທະນາ ແລະ ດຳເນີນການການມີສ່ວນຮ່ວມ, ການສົ່ງເສີມ ແລະ ໂຄສະນາເຜີຍແຜ່ການປະຕິບັດເພື່ອໃຫ້ບັນລຸເປົ້າໝາຍຂອງພວກເຂົາ.

ຂະບວນການທີ່ແຕກຕ່າງກັນຂອງ "ການສ້າງ" ແມ່ນເຊື່ອມໂຍງກັນຢ່າງໃກ້ຊິດ ແລະ ສາມາດທັບຊ້ອນກັນໄດ້. ຍົກຕົວຢ່າງ, ການສ້າງຄວາມເຊື່ອໝັ້ນ ແລະ ການສ້າງຊຸມຊົນສາມາດຊ່ວຍສ້າງຄວາມສຳພັນໃນການເຮັດວຽກທີ່ເຊື່ອໝັ້ນກັນໄດ້ໃນລະຫວ່າງຊຸມຊົນ ແລະ ຄູ່ຮ່ວມງານທີ່ສະໜັບສະໜູນ ແລະ ຍັງຊ່ວຍສົ່ງເສີມຄວາມສາມາດ ແລະ ທັກສະຂອງຊຸມຊົນທີ່ມີຢູ່ໃຫ້ເຂັ້ມແຂງຂຶ້ນ. ສິ່ງເຫຼົ່ານີ້, ຊ່ວຍສົ່ງເສີມເປົ້າໝາຍຄວາມເຂັ້ມແຂງທີ່ກ່ຽວຂ້ອງກັບການໂຄສະນາເຜີຍແຜ່ຂອງພວກເຂົາ. ອີກທາງເລືອກໜຶ່ງຄື, ຊຸມຊົນອາດຈະຕ້ອງການການສະໜັບສະໜູນແຕ່ອາດຈະບໍ່ມີເຄືອຂ່າຍພັນທະມິດທີ່ມີທ່າແຮງພໍ. ອີກຕົວຢ່າງໜຶ່ງແມ່ນ ຊຸມຊົນທີ່ອາດຈະຮ້ອງຂໍໃຫ້ມີການສະໜັບສະໜູນເພື່ອເສີມສ້າງທັກສະ ແລະ ຄວາມສາມາດກ່ອນທີ່ຈະສາມາດກຳນົດໄດ້ ແລະ ພັດທະນາຍຸດທະສາດສຳລັບເປົ້າໝາຍຂອງການໂຄສະນາເຜີຍແຜ່.

ກອບການດຳເນີນງານສະເໜີຄຳແນະນຳ ແລະ ຂໍ້ມູນກ່ຽວກັບກິດຈະກຳ ແລະ ເຄື່ອງມືທີ່ອົງການ EarthRights ແລະ ຄູ່ຮ່ວມງານນຳໃຊ້ເພື່ອສະໜັບສະໜູນເປົ້າໝາຍຂອງຊຸມຊົນ - ຮວມເຖິງການຝຶກອົບຮົມ ແລະ ກອງປະຊຸມຕ່າງໆ, ການສ້າງເຄືອຂ່າຍ ແລະ ການຮ່ວມມືດ້ານຍຸດທະສາດ, ຕະຫຼອດຮອດການມີສ່ວນຮ່ວມ ແລະ ການດຳເນີນການສົ່ງເສີມ. ກິດຈະກຳເຫຼົ່ານີ້, ສະທ້ອນໃຫ້ເຫັນເຖິງວິທີການເອົາຊຸມຊົນເປັນສູນກາງຂອງກອບການດຳເນີນງານ LEAD. ທັງນີ້ແມ່ນເປັນລັກສະນະສະເພາະ, ປັບປ່ຽນໄດ້ ແລະ ສາມາດສ້າງຍຸດທະສາດສຳລັບການໂຄສະນາເຜີຍແຜ່ (ແຄມເປນ) ທີ່ນຳພາໂດຍຊຸມຊົນ.

## 2.1 ບັນດາເຄື່ອງມືທີ່ໄດ້ຮັບການຮັບຮອງຈາກ LEAD

ພາຍໃນກອບການດຳເນີນງານນີ້ເປັນບັນດາເຄື່ອງມືທີ່ໄດ້ຮັບການຮັບຮອງຈາກ LEAD. ບັນດາເຄື່ອງມືເຫຼົ່ານີ້, ແມ່ນມີໂຄງສ້າງ ແລະ ກິດຈະກຳແບບເປັນທາງການຫຼາຍກວ່າ ແລະ ແຕ່ລະເຄື່ອງມືກໍມີຄູ່ມືການນຳໃຊ້ຂອງຕົນເອງ. ຮວມເຖິງບັນດາເຄື່ອງມືທີ່ພັດທະນາໂດຍອົງການ EarthRights (ການອອກແບບ CD-OGM) ເຊັ່ນດຽວກັນກັບບັນດາເຄື່ອງມືທີ່ພັດທະນາໂດຍອົງການອື່ນໆ ແຕ່ກໍເອົາມານຳໃຊ້ໂດຍອົງການ EarthRights. ອາດຈະມີການເພີ່ມບັນດາເຄື່ອງມືໃໝ່ໆໃນອະນາຄົດ, ແຕ່ປັດຈຸບັນປະກອບມີ:

- ການສ້າງແຜນທີ່ແຫຼ່ງຊັບພະຍາກອນທຳມະຊາດໂດຍຊຸມຊົນ (CNRM)
- ການປະເມີນຜົນກະທົບດ້ານສຸຂະພາບໂດຍຊຸມຊົນ (CHIA)
- ການມີສ່ວນຮ່ວມຂອງຊຸມຊົນໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (CEWEIAs)
- ການອອກແບບກົນໄກການຮ້ອງທຸກລະດັບການປະຕິບັດການທີ່ຂັບເຄື່ອນໂດຍຊຸມຊົນ (CD-OGM)

**ການສ້າງແຜນທີ່ແຫຼ່ງຊັບພະຍາກອນທຳມະຊາດໂດຍຊຸມຊົນ (CNRM)** ເປັນເຄື່ອງມືເພື່ອເກັບກຳຮວບຮວມຂໍ້ມູນຂ່າວສານສຳລັບຊຸມຊົນ ເພື່ອບັນທຶກສະພາບແວດລ້ອມທາງດ້ານກາຍະພາບ, ສັງຄົມ ແລະ ວັດທະນະທຳ. ສະມາຊິກພາຍໃນຊຸມຊົນໄດ້ຮັບການຝຶກອົບຮົມກ່ຽວກັບກິດຈະກຳຕ່າງໆ ແລະ ເປັນຜູ້ນຳໃນການບັນທຶກສະພາບແວດລ້ອມໂດຍພວກເຂົາເອງ. ເຊິ່ງຈະຮວມເຖິງການບັນທຶກເອົາແຫຼ່ງນ້ຳ, ທີ່ດິນກະສິກຳ, ເສດຖະກິດທ້ອງຖິ່ນ ແລະ ຄວາມສຳຄັນທາງດ້ານວັດທະນະທຳ ແລະ ປະຫວັດສາດຂອງທີ່ດິນ ແລະ ຊັບພະຍາກອນນັ້ນໆ. ເອກະສານດັ່ງກ່າວນັ້ນ ແມ່ນຊ່ວຍສ້າງຄຳອະທິບາຍທີ່ຖືກຕ້ອງ ແລະ ສາມາດຢັ້ງຢືນໄດ້ກ່ຽວກັບທີ່ດິນ ແລະ ມູນຄ່າທີ່ແທ້ຈິງຂອງທີ່ດິນນັ້ນ ແລະ ສະໜັບສະໜູນຊຸມຊົນໃຫ້ເຫັນຄຸນຄ່າຂອງຊັບພະຍາກອນທຳມະຊາດໃນພື້ນທີ່ຂອງຕົນ. ໂດຍຈະສະໜອງຂໍ້ມູນພື້ນຖານທີ່ອາດຈະເປັນປະໂຫຍດໃນການສົ່ງເສີມໃນອະນາຄົດໄດ້.

**ການປະເມີນຜົນກະທົບດ້ານສຸຂະພາບໂດຍຊຸມຊົນ (CHIA)** ເປັນເຄື່ອງມືເພື່ອເກັບກຳຮວບຮວມຂໍ້ມູນອີກອັນໜຶ່ງທີ່ຊ່ວຍໃຫ້ຊຸມຊົນສາມາດບັນທຶກກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການພາຍໃນຊຸມຊົນຂອງຕົນ. ສະມາຊິກພາຍໃນຊຸມຊົນໄດ້ຮັບການຝຶກອົບຮົມກ່ຽວກັບກິດຈະກຳຕ່າງໆ ແລະ ເປັນຜູ້ນຳໃນການກຳນົດ ແລະ ບັນທຶກຜົນກະທົບ ຫຼື ຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການທີ່ອາດມີຕໍ່ຊັບພະຍາກອນທຳມະຊາດ, ເສດຖະກິດ, ສຸຂະພາບ, ວັດທະນະທຳ ແລະ ມໍລະດົກທາງປະຫວັດສາດຂອງພວກເຂົາ. ມີບາງກິດຈະກຳທັບຊ້ອນກັບກິດຈະກຳທີ່ຢູ່ໃນ CNRM. ການໃຊ້ຄຳວ່າ "ສຸຂະພາບ" ໝາຍເຖິງສຸຂະພາບໂດຍຮວມຂອງຊຸມຊົນ, ຮວມທັງປັດໄຈຕ່າງໆທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການ. ຂໍ້ມູນທີ່ເກັບຮວບຮວມມານັ້ນອາດຈະເປັນປະໂຫຍດໃນເວລາທີ່ມີສ່ວນຮ່ວມໃນການສົ່ງເສີມ ແລະ/ຫຼື ຊອກຫາການແກ້ໄຂຢຽວຢາ.

**ການມີສ່ວນຮ່ວມຂອງຊຸມຊົນໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (CEWEIAs)** ເປັນເຄື່ອງມືການມີສ່ວນຮ່ວມ ແລະ ການສົ່ງເສີມເພື່ອໃຫ້ຊຸມຊົນມີອິດທິພົນຕໍ່ໂຄງການພັດທະນາ ຫຼື ພະຍາຍາມຢຸດຕິໂຄງການຫາກບໍ່ສາມາດແກ້ໄຂຜົນກະທົບທີ່ເປັນອັນຕະລາຍໄດ້. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA) ຈະປະເມີນຜົນກະທົບຂອງໂຄງການໃດໜຶ່ງ ແລະ ຂະບວນການນີ້ຈະຕ້ອງໄດ້ສຳເລັດກ່ອນທີ່ໂຄງການນັ້ນຈະໄດ້ຮັບການອະນຸມັດ. ແຕ່ລະປະເທດ ຈະມີກົດໝາຍຂໍ້ກຳນົດການມີສ່ວນຮ່ວມຂອງປະຊາຊົນທີ່ແຕກຕ່າງກັນ. ແຕ່ໂດຍທົ່ວໄປແລ້ວ, ໃນຂັ້ນຕອນຕ່າງໆຂອງຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA), ຄວນມີໂອກາດໃຫ້ຊຸມຊົນ ແລະ ປະຊາຊົນທົ່ວໄປທີ່ອາດໄດ້ຮັບຜົນກະທົບສາມາດເຂົ້າຮ່ວມແຊກແຊງ, ກ່າວແຈ້ງເຖິງຄວາມກັງວົນ ແລະ ສະເໜີວິທີການແກ້ໄຂ ຫຼື ປ່ຽນແປງໂຄງການນັ້ນ. ຖ້າຫາກຊຸມຊົນເລືອກທີ່ຈະເຂົ້າຮ່ວມໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA), ເຄື່ອງມືນີ້ຈະສະໜອງຄຳແນະນຳທີ່ຈຳເປັນແກ່ພວກເຂົາ.

**ການອອກແບບກົນໄກການຮ້ອງທຸກລະດັບການປະຕິບັດການທີ່ຂັບເຄື່ອນໂດຍຊຸມຊົນ (CD-OGM)** ເປັນເຄື່ອງມືການມີສ່ວນຮ່ວມທີ່ເກີດຂຶ້ນມາໃໝ່ ເພື່ອຊ່ວຍໃນການເຂົ້າເຖິງການໄດ້ຮັບການແກ້ໄຂຢຽວຢາສຳລັບອັນຕະລາຍທີ່ເກີດຂຶ້ນຈາກໂຄງການໂດຍການຊີ້ແຈງ ແລະ ໂຄສະນາປຸກລະດົມສິ່ງທີ່ພວກເຂົາຕ້ອງການໃຫ້ກົນໄກໄດ້ຮັບການແກ້ໄຂຢຽວຢາໃນທ້ອງຖິ່ນມີລັກສະນະແບບໃດ. ອີງຕາມຫຼັກການແນະນຳຂອງອົງການສະຫະປະຊາຊາດກ່ຽວກັບທຸລະກິດ ແລະ ສິດທິມະນຸດ (UNGPs), ບັນດາບໍລິສັດຖືກຄາດຫວັງໃຫ້ສ້າງ ຫຼື ມີສ່ວນຮ່ວມໃນຂະບວນການໄດ້ຮັບການແກ້ໄຂຢຽວຢາໃນທ້ອງຖິ່ນທີ່ພວກເຂົາມີກິດຈະກຳທາງທຸລະກິດນັ້ນ. ສິ່ງເຫຼົ່ານີ້ມັກຈະເອີ້ນວ່າ ກົນໄກການຮ້ອງທຸກລະດັບປະຕິບັດການ (OGMs). ກົນໄກການຮ້ອງທຸກລະດັບປະຕິບັດການ (OGMs) ມີແນວໂນ້ມທີ່ຈະອອກແບບ ແລະ ດຳເນີນການໂດຍບໍລິສັດເອງ, ແຕ່ໃນ CD-OGM, ຊຸມຊົນຈະເປັນຜູ້ນຳພາການອອກແບບ - ອະທິບາຍວ່າພວກເຂົາຕ້ອງການໃຫ້ຂະບວນການມີລັກສະນະເປັນແບບໃດ, ອັນຕະລາຍແບບໃດທີ່ຄວນຈະຖືກແກ້ໄຂ ແລະ ປະເພດຂອງການແກ້ໄຂຢຽວຢາທີ່ຄວນຈະໄດ້ຮັບ - ແລະ ສະເໜີໃຫ້ບໍລິສັດໄດ້ເຂົ້າຮ່ວມແບບດຽວກັນກັບທີ່ເຮັດໃນກົນໄກການຮ້ອງທຸກລະດັບປະຕິບັດການ (OGM) ຂອງຕົນ. ອີກທາງເລືອກໜຶ່ງຄື, ຊຸມຊົນອາດຈະພະຍາຍາມອອກແບບຮ່ວມກັບບໍລິສັດນັ້ນຕັ້ງແຕ່ຕົ້ນເລີຍ.

## 2.2 ການສ້າງຄວາມເຊື່ອໝັ້ນ




ການສ້າງ ແລະ ຮັກສາຄວາມເຊື່ອໝັ້ນນັ້ນ ແມ່ນມີທັງຄວາມສໍາຄັນ ແລະ ຂຶ້ນກັບສະພາບການສະເພາະ. ມັນຈະຂຶ້ນຢູ່ກັບວ່າຄູ່ຮ່ວມງານມີຄວາມສໍາພັນທີ່ມີຢູ່ແລ້ວກັບຊຸມຊົນນັ້ນ ຫຼືບໍ່, ຄວາມຮັບຮູ້ຂອງຊຸມຊົນ ແລະ ປະສົບການທີ່ຜ່ານມາກັບຄູ່ຮ່ວມງານ (ໂດຍສະເພາະກັບອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs), ບັນຫາເລື່ອງການຂົນສົ່ງ ແລະ ການປະຕິບັດງານ, ຕະຫຼອດຮອດປະເດັນຄວາມອ່ອນໄຫວຂອງສະພາບແວດລ້ອມທາງການເມືອງ. ການສ້າງຄວາມເຊື່ອໝັ້ນໄດ້ຮຽກຮ້ອງໃຫ້ຕ່າງຝ່າຍຕ່າງມີຄວາມສັດຊື່ ແລະ ເຄົາລົບເຊິ່ງກັນແລະກັນ. ການສ້າງ ແລະ ຮັກສາຄວາມເຊື່ອໝັ້ນຕ້ອງໃຊ້ເວລາ ແລະ ເປັນຂະບວນການຢ່າງຕໍ່ເນື່ອງ.

- **ການຫຼີກເວັ້ນການປະຕິບັດທີ່ສະກັດກັ້ນ ແລະ ການສະແດງຄວາມເຄົາລົບ.** ປະຕິບັດຕາມຄ່ານິຍົມຫຼັກ ແລະ ໃຫ້ຈື່ບົດບາດຫຼັກຂອງຊຸມຊົນ. ສະແດງໃຫ້ເຫັນໂດຍຜ່ານການກະທໍາຂອງທ່ານວ່າ ບົດບາດຂອງທ່ານແມ່ນເພື່ອສະໜັບສະໜູນ, ຄວາມຮູ້ ແລະ ຄວາມເປັນເຈົ້າຂອງໃນທ້ອງຖິ່ນເປັນສິ່ງສໍາຄັນ ແລະ ຈຸດປະສົງຂອງການເປັນຄູ່ຮ່ວມງານແມ່ນເພື່ອຜົນປະໂຫຍດຂອງຊຸມຊົນເອງ.
- **ມີຄວາມຊື່ສັດ ແລະ ໂປ່ງໃສ.** ມີຄວາມຊັດເຈນກ່ຽວກັບບົດບາດຂອງທ່ານ, ກ່ຽວກັບຂໍ້ຈໍາກັດຂອງຍຸດທະສາດ ຫຼື ກິດຈະກໍາໃດໆ ແລະ ຄວາມສ່ຽງທີ່ກ່ຽວຂ້ອງ. ສິ່ງສໍາຄັນຄືຕ້ອງເຂົ້າໃຈຄວາມຄາດຫວັງຂອງຊຸມຊົນ ແລະ ຊີ້ແຈງຄວາມສໍາພັນຂອງທ່ານ.
- **ໃຊ້ເວລາກັບຊຸມຊົນ.** ການໃຊ້ເວລາກັບຊຸມຊົນທີ່ທ່ານກໍາລັງສະໜັບສະໜູນຢູ່ ແມ່ນວິທີທີ່ສໍາຄັນທີ່ຈະສ້າງຄວາມສໍາພັນອັນແໜ້ນແຟ້ນ. ນອກຈາກນີ້, ມັນຍັງຈະຊ່ວຍໃຫ້ເຂົ້າໃຈຊຸມຊົນ ແລະ ໂຄງການທີ່ຈະເກີດຂຶ້ນໃນຊຸມຊົນອີກດ້ວຍ.

- **ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈ.** ເຖິງແມ່ນວ່າຄູ່ຮ່ວມງານຈະບໍ່ສາມາດຢູ່ໃນຊຸມຊົນໄດ້ຕະຫຼອດເວລາ ຫຼື ຖ້າຊຸມຊົນບໍ່ຕ້ອງການໃຫ້ຄູ່ຮ່ວມງານຢູ່ອີກແລ້ວ, ກໍຍັງມີວິທີການຕ່າງໆສຳລັບຄູ່ຮ່ວມງານເພື່ອສະແດງໃຫ້ເຫັນເຖິງຄວາມຕັ້ງໃຈທີ່ຈະເຮັດວຽກຮ່ວມກັບຊຸມຊົນ. ການຮັກສາການສື່ສານຮ່ວມກັນ, ການລາຍງານຄືນກ່ຽວກັບຂໍ້ມູນທີ່ຊຸມຊົນທີ່ອາດຈະຕ້ອງການ ແລະ ປະຕິບັດຕາມຄວາມຕັ້ງໃຈ ຫຼື ຄຳໝັ້ນສັນຍາທີ່ໃຫ້ໄວ້ທັງໝົດຈະຊ່ວຍສະແດງໃຫ້ຊຸມຊົນເຫັນວ່າຄູ່ຮ່ວມງານມີຄວາມຕັ້ງໃຈທີ່ຈະສະໜັບສະໜູນຊຸມຊົນໃນຖານະເປັນພັນທະມິດ.

## 2.3 ການສ້າງຊຸມຊົນ




### 2.3.1 ການຮວບຮວມຂໍ້ມູນ ແລະ ການຄົ້ນຄວ້າຮ່ວມກັນ

ໃນຫຼາຍໆສະຖານະການ, ຊຸມຊົນອາດຈະບໍ່ຮູ້ວ່າມີໂຄງການໃດໜຶ່ງໄດ້ຖືກວາງແຜນຢູ່ໃນພື້ນທີ່ຂອງພວກເຂົາແລ້ວ. ຖ້າເປັນແນວນັ້ນ, ຊຸມຊົນອາດຈະບໍ່ໄດ້ຮັບການແຈ້ງວ່າມັນຈະເກີດຜົນກະທົບແນວໃດ ແລະ ຈະສົ່ງຜົນຕໍ່ຊຸມຊົນໄດ້ແນວໃດ. ຊຸມຊົນອາດຈະບໍ່ໄດ້ຖືກແຈ້ງບອກເລີຍ ຫຼື ອາດຈະໄດ້ຮັບຂໍ້ມູນບາງສ່ວນ ຫຼື ບໍ່ຖືກຕ້ອງເພື່ອເປັນການຊຸກຍູ້ໂຄງການໃຫ້ໄດ້ໄປຕໍ່. ການເຂົ້າເຖິງຂໍ້ມູນຂ່າວສານ ແມ່ນສິດຂັ້ນພື້ນຖານຂອງມະນຸດ, ແຕ່ກໍເປັນສິ່ງທ້າທາຍທີ່ຈະໄດ້ຮັບເຊັ່ນກັນ. ການເຂົ້າເຖິງຂໍ້ມູນຂ່າວສານຍັງຄົງເປັນເລື່ອງຫຍຸ້ງຍາກສຳລັບຊຸມຊົນທີ່ປະເຊີນກັບຜົນກະທົບຈາກບັນດາກິດຈະກຳທາງທຸລະກິດ ແລະ ໂຄງການພັດທະນາຕ່າງໆ. ການດຳເນີນການຄົ້ນຄວ້າຮ່ວມກັນ ແລະ ກິດຈະກຳການຮວບຮວມຂໍ້ມູນບໍ່ພຽງແຕ່ສາມາດຊ່ວຍຊຸມຊົນໃນການຮວບຮວມຂໍ້ມູນທີ່ຈຳເປັນໄດ້ເທົ່ານັ້ນ, ແຕ່ຂະບວນການດຳເນີນກິດຈະກຳເຫຼົ່ານີ້ມັກຈະເພີ່ມຄວາມສົນໃຈ, ຄວາມໝັ້ນໃຈ ແລະ ຄວາມເປັນຜູ້ນຳຂອງສະມາຊິກພາຍໃນຊຸມຊົນ.

- ***ການທັດສະນະສຶກສາ***

ວິທີໜຶ່ງທີ່ມີປະສິດທິພາບທີ່ຈະຊ່ວຍໃຫ້ຊຸມຊົນເຂົ້າໃຈເຖິງຜົນກະທົບທີ່ອາດຈະເກີດຂຶ້ນຈາກໂຄງການຄື ການໄດ້ເຫັນເຖິງຜົນກະທົບຂອງໂຄງການທີ່ຄ້າຍຄືກັນດ້ວຍຕາຕົນເອງ. ເມື່ອຜູ້ສະເໜີໂຄງການສົນທະນາກັບຊຸມຊົນກ່ຽວກັບໂຄງການ, ພວກເຂົາມັກຈະເຮັດໃຫ້ຟັງເບິ່ງເປັນອັນຕະລາຍໜ້ອຍກວ່າຕົວຈິງ. ນອກຈາກນີ້, ມັນຍັງອາດເປັນເລື່ອງຍາກທີ່ຈະຈິນຕະນາການເຖິງຂະໜາດຂອງຜົນກະທົບທີ່ໄດ້ອະທິບາຍໄວ້ໃນເອກະສານຕ່າງໆເຊັ່ນ: ບົດການປະເມີນຜົນກະທົບສິ່ງແວດລ້ອມ (EIAs). ການເດີນທາງອອກໄປທັດສະນະຍັງສ້າງໂອກາດໃຫ້ມີຄວາມສາມັກຄີ ແລະ ເປັນການສ້າງເຄືອຂ່າຍໃນທົ່ວຊຸມຊົນທີ່ອາດຈະປະເຊີນກັບສິ່ງທ້າທາຍ ແລະ ຜົນກະທົບທີ່ຄ້າຍຄືກັນ.

- ***ກິດຈະກຳການສ້າງແຜນທີ່***

ການສ້າງແຜນທີ່ແມ່ນມີປະໂຫຍດຫຼາຍໃນການສ້າງຊຸມຊົນໂດຍການກຳນົດ ແລະ ເຮັດເອກະສານຂໍ້ມູນທີ່ກ່ຽວຂ້ອງ ແລະ ກະກຽມພື້ນທີ່ໃນການເຮັດວຽກຮ່ວມກັນ ແລະ ການມີສ່ວນຮ່ວມ. ກິດຈະກຳການສ້າງແຜນທີ່ຊ່ວຍໃຫ້:

- ສະແດງພາບທີ່ຖືກຕ້ອງຂອງຊຸມຊົນ ແລະ ຄຸນຄ່າຂອງມັນ, ຈາກມຸມມອງຂອງຊຸມຊົນເອງ. **ການສ້າງແຜນທີ່ແຫຼ່ງຊັບພະຍາກອນທຳມະຊາດໂດຍຊຸມຊົນ (CNRM)** ກ່ຽວຂ້ອງກັບການຮວບຮວມຂໍ້ມູນ ແລະ ການເຮັດວຽກຮ່ວມກັນໃນການຈັດເອກະສານ ເຊິ່ງຈະຊ່ວຍພັດທະນາ ແລະ ເສີມສ້າງຄວາມໝັ້ນໃຈ ແລະ ທັກສະການເປັນຜູ້ນຳອີກດ້ວຍ. ຊຸມຊົນສາມາດກຳນົດ ແລະ ຊີ້ບອກມູນຄ່າຂອງທີ່ດິນຂອງພວກເຂົາໂດຍຜ່ານເຄື່ອງມື CNRM ໄດ້. ນີ້ອາດຈະເປັນການເພີ່ມຄວາມຮູ້ສຶກຂອງການມີກຽດສັກສີ ແລະ ສ້າງຄວາມເຂົ້າໃຈທີ່ດີຂຶ້ນ ວ່າທຸກຄົນໃນຊຸມຊົນກໍມີສ່ວນສະໜັບສະໜູນຄ່ານິຍົມຂອງຕົນໄດ້ແນວໃດ.
- ກຳນົດຂອບເຂດຜົນກະທົບທີ່ອາດເກີດຂຶ້ນຂອງໂຄງການໄດ້ຢ່າງທ່ຽງກົງ. **ການປະເມີນຜົນກະທົບດ້ານສຸຂະພາບໂດຍຊຸມຊົນ (CHIA)** ຄ້າຍຄືກັນນີ້ແມ່ນກ່ຽວຂ້ອງກັບການຮວບຮວມຂໍ້ມູນ ແລະ ການເຮັດວຽກຮ່ວມກັນໃນການຈັດເອກະສານ, ເຊິ່ງຈະຊ່ວຍພັດທະນາ ແລະ ເສີມສ້າງຄວາມໝັ້ນໃຈ ແລະ ທັກສະການເປັນຜູ້ນຳອີກດ້ວຍ. ການປະເມີນດັ່ງກ່າວສາມາດຊ່ວຍເພີ່ມຄວາມສາມັກຄີຂອງຊຸມຊົນໂດຍການສ້າງຄວາມເຂົ້າໃຈຮ່ວມກັນວ່າໂຄງການອາດຈະສົ່ງຜົນກະທົບທາງລົບຕໍ່ຊຸມຊົນທັງໝົດໄດ້ແນວໃດ ແລະ ຍົກສູງລະດັບກຽດສັກສີຂອງຊຸມຊົນໂດຍການມີສ່ວນຮ່ວມໃນການສ້າງຫຼັກຖານດ້ວຍຕົນເອງສຳລັບການສົ່ງເສີມ.
- ກຳນົດຜູ້ທີ່ມີສ່ວນກ່ຽວຂ້ອງພາຍໃນໂຄງການ, ເພື່ອປະເມີນລະດັບອຳນາດ ແລະ ການວາງຕຳແໜ່ງໃນການສະໜັບສະໜູນ ຫຼື ຕໍ່ຕ້ານ. ການເຮັດແຜນຜັງຜູ້ມີສ່ວນຮ່ວມ ແລະ ມີອຳນາດເປັນຍຸດທະສາດການໂຄສະນາເຜີຍແຜ່ ແລະ ການສົ່ງເສີມທີ່ໃຊ້ກັນໂດຍທົ່ວໄປ ແລະ ມີປະສິດທິພາບ.
- ກຳນົດພັນທະທາງກົດໝາຍ, ຄຳໝັ້ນສັນຍາ ແລະ ໂອກາດທີ່ມີທ່າແຮງອື່ນໆ ທີ່ອາດເກີດຂຶ້ນກັບຜູ້ກ່ຽວຂ້ອງເຫຼົ່ານີ້, ຕະຫຼອດຮອດຍຸດທະສາດທາງດ້ານກົດໝາຍ ແລະ ເຄື່ອງກົດໝາຍທີ່ມີຢູ່ທັງໝົດ. **ການອອກແບບກົນໄກການຮ້ອງທຸກລະດັບປະຕິບັດການທີ່ຂັບເຄື່ອນໂດຍຊຸມຊົນ (CD-OGM)** ປະກອບດ້ວຍການດຳເນີນການແບບມີສ່ວນຮ່ວມ ແລະ ການເຮັດວຽກຮ່ວມກັນ, ໂດຍທີ່ທຸກຄົນຂໍຂໍ້ມູນເຂົ້າສູ່ຂັ້ນຕອນຂະບວນການ, ຂໍຂະບວນການກວດກາ ແລະ ການດຳເນີນການຈາກທຸກຄົນ. ມັນຊ່ວຍພັດທະນາ ແລະ ເສີມສ້າງຄວາມໝັ້ນໃຈ ແລະ ທັກສະການເປັນຜູ້ນຳ. ຄວາມສຳເລັດໃນການເຈລະຈາ ແລະ/ຫຼື ການເອົາ CD-OGM ໄປປະຕິບັດ ອາດຈະເພີ່ມຄວາມຮູ້ສຶກເຖິງການມີກຽດສັກສີ, ຄວາມໝັ້ນໃຈ ແລະ ຄວາມສາມັກຄີພາຍໃນຊຸມຊົນ.

## 2.3.2 ການຝຶກອົບຮົມ ແລະ ກອງປະຊຸມຝຶກອົບຮົມ

ຊຸມຊົນແມ່ນແຫຼ່ງຄວາມຮູ້ທີ່ສຳຄັນ, ແຕ່ພວກເຂົາອາດຈະບໍ່ສາມາດເຂົ້າເຖິງຄວາມຮູ້ ແລະ ຂໍ້ມູນຂ່າວສານທີ່ຈະຊ່ວຍໃຫ້ພວກເຂົາເຂົ້າໃຈໂຄງການ, ສິດຂອງພວກເຂົາ ແລະ ວິທີການມີສ່ວນຮ່ວມໃນການປົກປ້ອງສິດເຫຼົ່ານັ້ນໄດ້ດີຂຶ້ນ. ການຝຶກອົບຮົມ ແມ່ນເປັນການໃຫ້ໂອກາດແກ່ສະມາຊິກພາຍໃນຊຸມຊົນໄດ້ພັດທະນາ ແລະ ປັບປຸງຄວາມຮູ້ ແລະ ທັກສະທີ່ຈຳເປັນເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດຂອງພວກເຂົາໄດ້ຢ່າງມີປະສິດທິພາບ. ມີການຝຶກອົບຮົມປະເພດຕ່າງໆ ທີ່ສາມາດເປັນປະໂຫຍດ, ຮວມມີ:

- **ທັກສະ ແລະ ຄວາມຮູ້ພື້ນຖານ.** ສິ່ງເຫຼົ່ານີ້ແມ່ນຂຶ້ນກັບສະພາບການ ແລະ ອາດຈະປະກອບມີການຝຶກອົບຮົມວິທີການເຂົ້າຮ່ວມໃນກິດຈະກຳສ້າງແຜນທີ່ ທີ່ໄດ້ກ່າວມາຂ້າງເທິງນັ້ນ, ການພັດທະນາການເຈລະຈາ ແລະ ການເວົ້າໃນທີ່ສາທາລະນະ ຫຼື ບັນຫາທາງດ້ານວິຊາການອື່ນໆ.
- **ສິດຂັ້ນພື້ນຖານ.** ສິ່ງເຫຼົ່ານີ້ຊ່ວຍໃຫ້ຊຸມຊົນເຂົ້າໃຈເຖິງການປົກປ້ອງສິດທັງພາຍໃນ, ພາກພື້ນ ແລະ ສາກົນທີ່ພວກເຂົາມີສິດ ແລະ ອາດຈະຊອກຫາວິທີການເພື່ອປົກປ້ອງ.
- **ທາງດ້ານກົດໝາຍ.** ສິ່ງເຫຼົ່ານີ້ຊ່ວຍໃຫ້ຊຸມຊົນເຂົ້າໃຈກົດໝາຍທັງພາຍໃນ, ພາກພື້ນ ຫຼື ສາກົນທີ່ກ່ຽວຂ້ອງກັບຊຸມຊົນຂອງພວກເຂົາ ແລະ ໂຄງການ.
- **ເວທີໃນກອງປະຊຸມ.** ນີ້ແມ່ນວິທີການສະເພາະສຳລັບການມີສ່ວນຮ່ວມຂອງຊຸມຊົນ ແລະ ຜູ້ນຳໃນສັງຄົມ.
- **ການມີສ່ວນຮ່ວມຂອງຊຸມຊົນກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIAs).** ສິ່ງເຫຼົ່ານີ້ຊ່ວຍໃຫ້ຊຸມຊົນເຂົ້າໃຈຂະບວນການຂອງ EIA ແລະ ວິທີການມີສ່ວນຮ່ວມຢ່າງມີປະສິດທິພາບ ຖ້າຫາກພວກເຂົາເລືອກທີ່ຈະເຮັດແບບນັ້ນ.

## 2.3.3 ສະໜັບສະໜູນການສື່ສານພາຍໃນຊຸມຊົນ

ມີຄວາມເຂັ້ມແຂງໃນດ້ານຈຳນວນ ແລະ ຄວາມເຂັ້ມແຂງໃນດ້ານຂໍ້ມູນ ແລະ ຄວາມຮູ້. ເມື່ອຊຸມຊົນມີຂໍ້ມູນຫຼາຍຂຶ້ນ ແລະ ການສື່ສານທີ່ເຂັ້ມແຂງຂອງພວກເຂົາ ແລະ ການເຮັດວຽກຮ່ວມກັນຢ່າງແໜ້ນແຟ້ນຍິ່ງຂຶ້ນເທົ່າໃດ, ຊຸມຊົນກໍຈະມີຄວາມພ້ອມໃນການຕັດສິນໃຈຫຼາຍຂຶ້ນເທົ່ານັ້ນ ແລະ ຈະມີຈຸດຢືນທີ່ເຂັ້ມແຂງຂຶ້ນໃນການໃຊ້ປະໂຫຍດເພື່ອການເຈລະຈານັ້ນໆ.

ວິທີການສື່ສານແບບມີສ່ວນຮ່ວມຈະຮັບປະກັນໄດ້ວ່າ ຈະໄດ້ຍິນສຽງຈາກກຸ່ມຄົນຜູ້ທີ່ດ້ອຍໂອກາດ. ການມີບາງສິ່ງທີ່ຈັດລະບຽບສາມາດຊ່ວຍສົ່ງເສີມສະພາບແວດລ້ອມທີ່ມີສ່ວນຮ່ວມຫຼາຍຂຶ້ນ. ສະພາບແວດລ້ອມທີ່ມີສ່ວນຮ່ວມຫຼາຍຂຶ້ນສາມາດສ້າງຊຸມຊົນທີ່ເຂັ້ມແຂງຂຶ້ນໄດ້.

ແຕ່ລະຊຸມຊົນຈະມີວິທີການຈັດລະບຽບ ແລະ ຍຸດທະສາດການສື່ສານທີ່ແຕກຕ່າງກັນ. ບາງກິດຈະກຳທີ່ເປັນປະໂຫຍດອາດຈະປະກອບມີ:

- ການປະຊຸມຢ່າງເປັນປົກກະຕິ, ບໍ່ວ່າຈະເປັນທາງການ ຫຼື ບໍ່ເປັນທາງການ
- ການສະຫຼຸບຢ່າງລະອຽດ ແລະ ການຮັບຟັງຄຳຄິດເຫັນ
- ການລາຍງານຢ່າງເປັນປົກກະຕິ
- ການເຮັດວຽກເປັນກຸ່ມ



## 2.4 ການສ້າງການໂຄສະນາເຜີຍແຜ່ແຄມເປນ




ພາລະບົດບາດຂອງຄູ່ຮ່ວມງານທີ່ສະໜັບສະໜູນໃນການກໍ່ສ້າງການໂຄສະນາເຜີຍແຜ່ (ແຄມເປນ) ຈະມີລັກສະນະສະເພາະ, ຂຶ້ນກັບຄວາມຕ້ອງການ ແລະ ຄວາມເພິ່ງພໍໃຈຂອງຊຸມຊົນ. ການສະໜັບສະໜູນອາດຈະເປັນແບບເປີດເຜີຍ ຫຼື ຢູ່ເບື້ອງຫຼັງ ແລະ ຄູ່ຮ່ວມງານທີ່ສະໜັບສະໜູນອາດຈະເປັນຄູ່ຮ່ວມງານພຽງໜຶ່ງດຽວ ຫຼື ໜຶ່ງໃນເຄືອຂ່າຍທີ່ກວ້າງຂວາງກໍໄດ້.

### 2.4.1 ການດຳເນີນການສົ່ງເສີມ

ການດຳເນີນການສົ່ງເສີມ ໝາຍເຖິງກິດຈະກຳທີ່ຫຼາກຫຼາຍ ເຊິ່ງສາມາດເພີ່ມຄວາມສົນໃຈໃຫ້ກັບບັນຫາທີ່ຊຸມຊົນກຳລັງປະເຊີນຢູ່ ເພື່ອໃຫ້ໄດ້ຮັບການສະໜັບສະໜູນຫຼາຍຂຶ້ນ. ການດຳເນີນການສົ່ງເສີມສາມາດເກີດຂຶ້ນໄດ້ຢ່າງອ່ອນໂຍນ ແລະ ໃຫ້ຂໍ້ມູນ ໄປຈົນເຖິງການປະເຊີນໜ້າກັນຫຼາຍຂຶ້ນ, ທັງໝົດນີ້ແມ່ນຂຶ້ນກັບເປົ້າໝາຍ, ການໃຊ້ປະໂຫຍດ ແລະ ປະເດັນທາງດ້ານຄວາມປອດໄພຂອງຊຸມຊົນ.

ຕົວຢ່າງ ການດຳເນີນການສົ່ງເສີມປະກອບມີ:

- ການເວົ້າໃນທີ່ສາທາລະນະ;
- ນຳສະເໜີຫຼັກຖານ ແລະ ຜົນການຄົ້ນຄວ້າ, ຮວມທັງຜົນໄດ້ຮັບທີ່ຜະລິດໄດ້ຜ່ານເຄື່ອງມື CNRM ແລະ CHIA;
- ການເຂົ້າຮ່ວມກິດຈະກຳເຄືອຂ່າຍ ຫຼື ກິດຈະກຳການຮ່ວມມື;

- ນຳໃຊ້ສື່ໃນຫຼາຍຮູບແບບ ຮວມທັງການຈັດຖະແຫຼງຂ່າວ, ການເຊີນນັກຂ່າວມາຢ້ຽມຢາມ ແລະ ຮຽນຮູ້ກ່ຽວກັບສະຖານະການຂອງຊຸມຊົນ ແລະ ເຮັດວຽກຮ່ວມກັບນັກສ້າງຮູບເງົາເພື່ອບັນທຶກ ແລະ ແບ່ງປັນເລື່ອງລາວຂອງຊຸມຊົນ;
- ການດຳເນີນການໂດຍກົງ, ຮວມທັງການປະທ້ວງ, ການເດີນຂະບວນ ແລະ ກິດຈະກຳຂອງຊຸມຊົນ;
- ຈົດໝາຍ ຫຼື ໜັງສື ແລະ/ຫຼື ວັດຖຸ ທີ່ສົ່ງໄປໂດຍກົງເພື່ອໃຫ້ມີອິດທິພົນຕໍ່ການປ່ຽນແປງໃນລະດັບບໍລິສັດ ຫຼື ລັດຖະບານ.

### 2.4.2 ການຮ່ວມມືກັບຄູ່ຮ່ວມງານ ແລະ ເຄືອຂ່າຍ

ໃນຂະນະທີ່ຊຸມຊົນເປັນຜູ້ທີ່ມີບົດບາດສຳຄັນໃນການໂຄສະນາເຜີຍແຜ່ທີ່ປະສົບຜົນສຳເລັດ, ການເຮັດວຽກກັບຄູ່ຮ່ວມງານ ແລະ ເຄືອຂ່າຍສາມາດຊ່ວຍເຮັດໃຫ້ເຂັ້ມແຂງຂຶ້ນອີກໄດ້. ກຸ່ມຄົນເຫຼົ່ານີ້ອາດຈະເຂົ້າເຖິງຄວາມຊ່ຽວຊານສະເພາະດ້ານ, ອາດຈະສາມາດນຳເອົາເລື່ອງດັ່ງກ່າວໄປສູ່ຜູ້ຊົມທີ່ກວ້າງຂຶ້ນໄດ້, ອາດຈະສະເໜີໂອກາດທີ່ຈະແບ່ງປັນຍຸດທະສາດ ແລະ ແນວຄວາມຄິດ. ການຮ່ວມມືເຫຼົ່ານີ້ ສາມາດເກີດຂຶ້ນລະຫວ່າງຊຸມຊົນຕ່າງໆທີ່ອາດຈະປະເຊີນກັບບັນຫາທີ່ຄ້າຍຄືກັນ ຫຼື ກັບກຸ່ມຕ່າງໆພາຍໃນຊຸມຊົນດຽວກັນ. ນອກຈາກນີ້, ຍັງສາມາດຮວມເຖິງການເຮັດວຽກຮ່ວມກັນກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ນັກວິຊາການ, ຄັງຄວາມຄິດ, ສະຖາບັນເອກະຊົນ ຫຼື ອື່ນໆ.

ເປັນສິ່ງສຳຄັນທີ່ຄູ່ຮ່ວມງານ ແລະ ເຄືອຂ່າຍເຫຼົ່ານີ້ ຈະບໍ່ພະຍາຍາມຮ່ວມໃນການຕັດສິນໃຈ ຫຼື ດຶງເອົາຄວາມເປັນຜູ້ນຳອອກຈາກຊຸມຊົນ, ແຕ່ຄວນເຮັດວຽກຢູ່ໃນຄວາມສາມັກຄີອັນດຽວກັນທີ່ແທ້ຈິງກັບຊຸມຊົນ.

### 2.4.3 ການມີສ່ວນຮ່ວມກັບຜູ້ທີ່ມີບົດບາດກ່ຽວຂ້ອງກັບໂຄງການ

ຊຸມຊົນອາດຈະ ຫຼື ບໍ່ອາດຈະຕ້ອງການ ທີ່ຈະມີສ່ວນຮ່ວມໂດຍກົງກັບຜູ້ທີ່ມີບົດບາດກ່ຽວຂ້ອງກັບໂຄງການ ດ້ວຍເຫດຜົນຫຼາກຫຼາຍຢ່າງ. ຂອບເຂດຂອງຄວາມສາມາດໃນການມີສ່ວນຮ່ວມກໍຈະແຕກຕ່າງກັນ ໂດຍອີງຕາມສະພາບການ. ການມີສ່ວນຮ່ວມອາດຈະເປັນທາງການ ຫຼື ບໍ່ເປັນທາງການ ແລະ ອາດຈະເປັນການຮ່ວມມື ຫຼື ການປະເຊີນໜ້າ. ເຊິ່ງສິ່ງນີ້ຈະຂຶ້ນຢູ່ກັບເປົ້າໝາຍຂອງຊຸມຊົນ, ທ່າແຮງທີ່ພວກເຂົາມີ, ຄວາມສ່ຽງດ້ານຄວາມປອດໄພ ແລະ ປັດໄຈໃນສະພາບການອື່ນໆ. ການມີສ່ວນຮ່ວມສາມາດມີໄດ້ໃນຫຼາຍຮູບແບບ, ແລະ ອາດຈະປະກອບມີ:

- ການປະຊຸມໂດຍກົງກັບຜູ້ທີ່ມີສ່ວນກ່ຽວຂ້ອງກັບໂຄງການ;
- ແບ່ງປັນຜົນການຄົ້ນຄວ້າ ແລະ ການວິເຄາະທີ່ກ່ຽວຂ້ອງກັບໂຄງການ ເຊັ່ນ: ສິ່ງທີ່ຜະລິດໄດ້ຜ່ານເຄື່ອງມື CNRM ແລະ CHIA;
- ການມີສ່ວນຮ່ວມໃນການປຶກສາຫາລືຢ່າງເປັນທາງການ, ກິດຈະກຳຂອງຜູ້ມີສ່ວນກ່ຽວຂ້ອງຈາກຫຼາຍພາກສ່ວນ, ກິດຈະກຳການຕິດຕາມຂອງຊຸມຊົນ ຫຼື **ການມີສ່ວນຮ່ວມຂອງຊຸມຊົນໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIAs).**

ກິດຈະກຳການມີສ່ວນຮ່ວມອາດນຳໄປໃຊ້ຄຽງຄູ່ໄປກັບຍຸດທະສາດອື່ນໆ. ຍົກຕົວຢ່າງ, ຜົນຂອງການຄົ້ນຄວ້າ ແລະ ການວິເຄາະອາດຈະນຳໄປໃຊ້ໃນການດຳເນີນການສົ່ງເສີມ ເຊັ່ນ: ການເຜີຍແຜ່ການວິເຄາະຂອງການຄົ້ນຄວ້າ ຫຼື ການຖະແຫຼງຂ່າວໃນການປະຊຸມປຶກສາຫາລືຢ່າງເປັນທາງການ. ກິດຈະກຳການມີສ່ວນຮ່ວມອາດຈະເຮັດຮ່ວມກັນກັບຄູ່ຮ່ວມງານ ແລະ ເຄືອຂ່າຍເພື່ອເຂົ້າເຖິງຜູ້ຊົມທີ່ກວ້າງຂຶ້ນ. ແລະການມີສ່ວນຮ່ວມກັບຜູ້ທີ່ມີບົດບາດກ່ຽວຂ້ອງກັບໂຄງການອາດຈະຕ້ອງການເປັນສ່ວນໜຶ່ງຂອງການມີສ່ວນຮ່ວມໃນກົນໄກຄວາມຮັບຜິດຊອບ ຫຼື ຂະບວນການແກ້ໄຂຂໍ້ຂັດແຍ້ງ.

ຊຸມຊົນສາມາດປະເມີນວິທີການມີສ່ວນຮ່ວມຂອງພວກເຂົາໃໝ່ໄດ້ສະເໝີ. ຍົກຕົວຢ່າງ, ຖ້າການປະຊຸມໂດຍກົງ ແລະ ການຊອກຫາການດຳເນີນການຮ່ວມມືກັນບໍ່ໄດ້ຜົນ, ພວກເຂົາອາດຈະຕັດສິນໃຈດຳເນີນການໂດຍກົງ ຫຼື ເພີ່ມການໂຄສະນາອອກສູ່ພາຍນອກ. ຫຼື ຖ້າຫາກເກີດຄວາມສ່ຽງດ້ານຄວາມໝັ້ນຄົງປອດໄພຂຶ້ນ, ຊຸມຊົນອາດຈະຕ້ອງການປ່ຽນວິທີການມີສ່ວນຮ່ວມ ຫຼື ຢຸດຕິການມີສ່ວນຮ່ວມທັງໝົດ.

## 2.4.4 ການມີສ່ວນຮ່ວມໃນຂະບວນການທາງດ້ານກົດໝາຍ ແລະ/ຫຼື ເຄິ່ງກົດໝາຍ

ຂະບວນການທາງກົດໝາຍ ແລະ ເຄິ່ງທາງກົດໝາຍ ມັກຈະຖືກນຳໃຊ້ໃນການຊອກຫາແນວທາງການແກ້ໄຂຢຽວຢາຄວາມເສຍຫາຍຈາກໂຄງການ. ນອກຈາກນີ້ ຍັງອາດຈະຖືກນຳໃຊ້ເພື່ອພະຍາຍາມຢຸດຕິໂຄງການ, ທັງແບບຊົ່ວຄາວ ຫຼື ຖາວອນ. ແຕ່ລະຂະບວນການທາງດ້ານກົດໝາຍ ຫຼື ເຄິ່ງທາງກົດໝາຍມີທັງປະໂຫຍດ ແລະ ຄວາມທ້າທາຍ. ບາງສ່ວນສາມາດເຂົ້າເຖິງໄດ້ງ່າຍ, ແຕ່ອາດຈະໃຫ້ຜົນໄດ້ຮັບທີ່ບໍ່ພຽງພໍ ຫຼື ອາດຈະບໍ່ມີຜົນບັງຄັບໃຊ້ການໄດ້. ກົນໄກທີ່ແຮງກວ່າເຊັ່ນ: ຂັ້ນສານ, ອາດຈະໃຊ້ເວລາຍາວນານ ແລະ ມີລາຄາແພງ. ແຕ່ຂະບວນການເຫຼົ່ານີ້ຍັງແຕກຕ່າງກັນໄປຕາມວິທີດຳເນີນການ ແລະ ຜົນໄດ້ຮັບທີ່ຕັ້ງໃຈໄວ້. ພວກເຂົາອາດຈະສຸມໃສ່ທີ່ການແກ້ໄຂບັນຫາ ຫຼື ການຮັບຜິດຊອບ.

ຊຸມຊົນອາດຈະຕ້ອງການໃຊ້ຂະບວນການທາງດ້ານກົດໝາຍ ຫຼື ເຄິ່ງທາງກົດໝາຍ ຄຽງຄູ່ໄປກັບຍຸດທະສາດອື່ນໆ. ຍົກຕົວຢ່າງ, ການໄດ້ຮັບຄວາມສົນໃຈຈາກປະຊາຊົນ ແລະ ສື່ມວນຊົນ ເມື່ອມີການຍື່ນຄຳຮ້ອງທຸກ ທີ່ອາດສາມາດສ້າງຄວາມກົດດັນຕໍ່ຜູ້ດຳເນີນການ ແລະ ສ້າງອຳນາດເພີ່ມເຕີມໃຫ້ກັບຊຸມຊົນ. ເຖິງຢ່າງໃດກໍຕາມ, ຂະບວນການບາງຢ່າງຈະບໍ່ອະນຸຍາດໃຫ້ມີຄຳຮ້ອງທຸກ ຖ້າຫາກຊຸມຊົນມີສ່ວນຮ່ວມໃນກິດຈະກຳການສົ່ງເສີມປຸກລະດົມ ຫຼື ອາດຈະຈຳກັດສິ່ງທີ່ສາມາດເວົ້າຕໍ່ສາທາລະນະໄດ້. ນອກຈາກນີ້, ຍັງອາດຈະມີຄວາມສ່ຽງຈາກການຖືກຕອບໂຕ້ຈາກບໍລິສັດ ຫຼື ລັດຖະບານ ເມື່ອມີການເຂົ້າຮ່ວມໃນຂະບວນການເຫຼົ່ານີ້, ດັ່ງນັ້ນ ຄວນໄດ້ຮັບການປຶກສາຫາລືກ່ຽວກັບຄວາມສ່ຽງດ້ານຄວາມໝັ້ນຄົງປອດໄພໃນເວລາການປະເມີນທາງເລືອກຕ່າງໆ.

ກິດຈະກຳການສ້າງແຜນທີ່ ແລະ ການຝຶກອົບຮົມ ຫຼື ກອງປະຊຸມຝຶກອົບຮົມຕ່າງໆ ສາມາດຊ່ວຍພັດທະນາຄວາມເຂົ້າໃຈກ່ຽວກັບການຖືກຄຸ້ມຄອງທາງດ້ານກົດໝາຍທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງ ແລະ ມາດຕະຖານດ້ານສິດທິມະນຸດ, ຕະຫຼອດຮອດພັນທະໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ກ່ຽວຂ້ອງໃນໂຄງການ. ສິ່ງນີ້ສາມາດຊ່ວຍຊຸມຊົນໃນການຕັດສິນໃຈເຖິງຍຸດທະສາດທີ່ກ່ຽວກັບຂະບວນການໃດທີ່ເປັນໄປໄດ້ ແລະ ເປັນປະໂຫຍດໄດ້ຫຼາຍທີ່ສຸດ.

ຂະບວນການທາງດ້ານກົດໝາຍ ແລະ ເຄິ່ງກົດໝາຍທີ່ກ່ຽວຂ້ອງປະກອບມີ:

- **ການຂຶ້ນສານ (ການດຳເນີນຄະດີ)**. ຊຸມຊົນອາດສາມາດເຂົ້າເຖິງສານພາຍໃນປະເທດ ຫຼື ສານໃນປະເທດບ້ານເກີດຂອງບໍລິສັດໄດ້ ເຊິ່ງທັງໝົດນີ້ກໍຂຶ້ນຢູ່ກັບສະຖານະການໂດຍສະເພາະ.
- **ການນຳໃຊ້ສະຖາບັນສິດທິມະນຸດທັງພາຍໃນປະເທດ, ພາກພື້ນ ຫຼື ສາກົນ.** ຊຸມຊົນອາດເຂົ້າເຖິງຄະນະກຳມະການດ້ານສິດທິມະນຸດແຫ່ງຊາດ ຫຼື ຜູ້ກວດກາແຜ່ນດິນ, ຫຼື ສະຖາບັນສິດທິມະນຸດໃນລະດັບພາກພື້ນ ທັງໝົດນີ້ກໍຂຶ້ນຢູ່ກັບສະຖານະການສະເພາະ. ຊຸມຊົນອາດຈະຊອກຫາການຊ່ວຍເຫຼືອຈາກອົງການໜ່ວຍງານທີ່ກ່ຽວຂ້ອງຂອງສະຫະປະຊາຊາດ.
- **ການນຳໃຊ້ກົນໄກຄວາມຮັບຜິດຊອບພາຍນອກ.** ຫຼາຍໂຄງການມີເງິນທຶນພາຍນອກຈາກທະນາຄານເພື່ອການພັດທະນາ ຫຼື ຜູ້ໃຫ້ກູ້ທຶນອື່ນໆ. ກຸ່ມເຫຼົ່ານີ້ມັກຈະມີຄຳແນະນຳທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ແລະ ກົນໄກທີ່ສາມາດຍື່ນຄຳຮ້ອງທຸກໄດ້, ຖ້າຫາກຜູ້ກູ້ຢືມ (ບໍລິສັດ ຫຼື ລັດຖະບານ) ບໍ່ປະຕິບັດຕາມຄຳແນະນຳເຫຼົ່ານັ້ນ. ບາງບໍລິສັດເຂົ້າຮ່ວມໃນໂຄງການທີ່ມີຜູ້ມີສ່ວນກ່ຽວຂ້ອງຫຼາຍຝ່າຍ ຫຼື ແຜນການຍັ້ງຢືນ, ເຊິ່ງຍັງມີຄຳໝັ້ນສັນຍາ ແລະ ພັນທະ, ແລະ ກົນໄກທີ່ສາມາດຍື່ນຄຳຮ້ອງຮຽນໄດ້ ຖ້າຫາກສິ່ງເຫຼົ່ານັ້ນຖືກລະເມີດ.ບາງສ່ວນແມ່ນມາຈາກບັນດາປະເທດທີ່ເປັນສະມາຊິກຂອງອົງການເພື່ອການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD), ເຊິ່ງມີຈຸດຕິດຕໍ່ປະສານງານປະຈຳປະເທດ (NCP) ທີ່ເປັນບ່ອນຮັບຄຳຮ້ອງທຸກຈາກຊຸມຊົນ.
- **ກົນໄກການຮ້ອງທຸກໃນທ້ອງຖິ່ນ.** ທຸລະກິດຕ່າງໆແມ່ນຄາດຫວັງວ່າຈະຕ້ອງມີກົນໄກການຮ້ອງທຸກໃນທ້ອງຖິ່ນເພື່ອແກ້ໄຂຢຽວຢາຜົນກະທົບຂອງໂຄງການ. ຖ້າຫາກບໍ່ມີ ຫຼື ໄດ້ຮັບການຖືກອອກແບບມາບໍ່ດີ, ການອອກແບບ**ກົນໄກການຮ້ອງທຸກລະດັບການປະຕິບັດການທີ່ຂັບເຄື່ອນໂດຍຊຸມຊົນ (CD-OGM)** ອາດຈະສະໜອງວິທີການແກ້ໄຂບັນຫາທີ່ຖືກກຳນົດຜ່ານເຄື່ອງມືອື່ນໆນັ້ນ.
- **ຂະບວນການແກ້ໄຂບັນຫາໃນທ້ອງຖິ່ນອື່ນໆ** (ເຊິ່ງຂຶ້ນກັບສະພາບການສະເພາະ).

# 3. ວິທີການຂອງ LEAD ແລະ ສິດທິມະນຸດ

ເຄື່ອງມື ແລະ ກິດຈະກຳ LEAD ແມ່ນມີຈຸດປະສົງເພື່ອຊ່ວຍຊຸມຊົນໃນການປ້ອງກັນ ແລະ ປົກປ້ອງສິດທິມະນຸດຂອງພວກເຂົາ ເມື່ອປະເຊີນກັບກິດຈະກຳທາງທຸລະກິດ ແລະ ໂຄງການພັດທະນາ. ສິດທິມະນຸດ ຮວມເຖິງສິດໃນຂະບວນການຕ່າງໆເຊັ່ນ: ສິດໃນການເຂົ້າເຖິງຂໍ້ມູນຂ່າວສານ, ສິດທີ່ຈະມີສ່ວນຮ່ວມ ແລະ ສິດໃນການໄດ້ຮັບການແກ້ໄຂຢຽວຢາ. ນອກຈາກນີ້ຍັງຮວມເຖິງສິດທີ່ສຳຄັນອື່ນໆເຊັ່ນ: ສິດໃນມາດຕະຖານການດຳລົງຊີວິດທີ່ພຽງພໍ, ສິດໃນການມີສຸຂະພາບທີ່ດີ ແລະ ອື່ນໆ. ເຄື່ອງມືຕ່າງໆ, ເຊິ່ງຮວມມີການເກັບກຳຮວບຮວມຂໍ້ມູນ ແລະ ກິດຈະກຳການມີສ່ວນຮ່ວມ, ສາມາດຊ່ວຍຊຸມຊົນໃຫ້ໃຊ້ສິດຕາມຂັ້ນຕອນຂອງພວກເຂົາໄດ້ຢ່າງມີປະສິດທິພາບ.

ການໃຊ້ສິດຕາມຂັ້ນຕອນຊ່ວຍປົກປ້ອງສິດທິມະນຸດທີ່ສຳຄັນ. ຍົກຕົວຢ່າງ, ຖ້າມີຄວາມສ່ຽງທີ່ສິ່ງເສດເຫຼືອຈາກການຂຸດຄົ້ນບໍ່ແຮ່ໄຫຼລົງໄປສູ່ແຫຼ່ງນ້ຳຂອງທ່ານເນື່ອງຈາກໂຄງການຂຸດຄົ້ນບໍ່ແຮ່ນັ້ນ, ສິດຕ່າງໆທີ່ກ່າວມາອາດຈະໄດ້ຮັບຜົນກະທົບ. ໂດຍການນຳໃຊ້ສິດໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການມີສ່ວນຮ່ວມ, ທ່ານສາມາດຫຼຸດຜ່ອນ ຫຼື ປ້ອງກັນອັນຕະລາຍເຫຼົ່ານັ້ນໄດ້ ໂດຍການນຳໃຊ້ສິດຂອງທ່ານໃນການໄດ້ຮັບການແກ້ໄຂຢຽວຢາ, ທ່ານສາມາດຂໍຄ່າຊົດເຊີຍໄດ້ ຖ້າຫາກວ່າສິດທີ່ສຳຄັນເຫຼົ່ານັ້ນຖືກລະເມີດ.

ສິດຕາມຂັ້ນຕອນໃນການເຂົ້າເຖິງຂໍ້ມູນຂ່າວສານ, ສິດໃນການມີສ່ວນຮ່ວມ ແລະ ສິດໃນການໄດ້ຮັບການແກ້ໄຂຢຽວຢາ ໄດ້ຮັບການຍອມຮັບວ່າເປັນສິດຂັ້ນ "ພື້ນຖານ" ແລະ ໄດ້ຮັບການປະກາດຜ່ານເຄື່ອງມືສິດທິມະນຸດສາກົນເຊັ່ນ: ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ແລະ ສົນທິສັນຍາສາກົນວ່າດ້ວຍສິດດ້ານພົນລະເມືອງ ແລະ ສິດການເມືອງ. ໃນສະພາບການຂອງການດຳເນີນທຸລະກິດ ແລະ ສິດທິມະນຸດ, UNGPs ໄດ້ຮວບຮວມຫົວຂໍ້ທັງໝົດກ່ຽວກັບການໄດ້ຮັບການແກ້ໄຂຢຽວຢາ ແລະ ວິທີການກວດສອບຄວາມຈິງດ້ານສິດທິມະນຸດ ໂດຍການຊຸກຍູ້ການມີສ່ວນຮ່ວມກັບຜູ້ຖືສິດ. ໃນສະພາບຂອງການພັດທະນາ ແລະ ສິ່ງແວດລ້ອມ, ຫຼັກການຂໍ້ທີ 10 ຂອງຖະແຫຼງການຣິໂອ (Rio) ໄດ້ລະບຸເຖິງສິດທັງສາມ (03) ປະການເຫຼົ່ານັ້ນຢ່າງຊັດເຈນ. ຄຳແນະນຳດ້ານນະໂຍບາຍ ແລະ ນະໂຍບາຍການປ້ອງກັນ ແລະ ຄຳແນະນຳຂອງສະຖາບັນການເງິນຫຼາຍແຫ່ງ ໄດ້ຮຽກຮ້ອງໃຫ້ມີກິດຈະກຳຕ່າງໆເຊັ່ນ ການແບ່ງປັນຂໍ້ມູນ ແລະ ການປຶກສາຫາລື ແລະ ປຶກສາຫາລືກ່ຽວກັບຄວາມຕ້ອງການໃນຂະບວນການໄດ້ຮັບການແກ້ໄຂຢຽວຢາ. ນອກຈາກນັ້ນ, ແຕ່ລະປະເທດອາດມີກົດໝາຍ ແລະ ລະບຽບການສະເພາະທີ່ກ່ຽວຂ້ອງກັບສິດເຫຼົ່ານີ້.

ໃນຂະນະທີ່ວຽກງານຂອງ LEAD ແມ່ນແນໃສ່ການຍອມຮັບສິ່ງເຫຼົ່ານີ້ໃຫ້ເປັນສິດຂັ້ນພື້ນຖານ, ເຊິ່ງມັນຈະເປັນປະໂຫຍດໃຫ້ແກ່ການສ້າງແຜນຜັງກົດໝາຍ, ກົດລະບຽບ, ກອບການເຮັດວຽກ ແລະ ຄຳໝັ້ນສັນຍາທີ່ກ່ຽວຂ້ອງທັງໝົດກັບແຕ່ລະໂຄງການ ເພື່ອກຳນົດວິທີການທີ່ມີທ່າແຮງທີ່ສຸດໃນການປ້ອງກັນ ແລະ ປົກປ້ອງສິດເຫຼົ່ານັ້ນ.

**ການເຂົ້າເຖິງຂໍ້ມູນຂ່າວສານ.** ຊຸມຊົນມີສິດທີ່ຈະເຂົ້າໃຈຢ່າງຖືກຕ້ອງວ່າມີຫຍັງເກີດຂຶ້ນໃນທຸກໆຂັ້ນຕອນຂອງໂຄງການ. ແຕ່ຢ່າງໃດກໍຕາມ, ການເຂົ້າເຖິງຂໍ້ມູນຍັງຄົງເປັນອຸປະສັກທີ່ສຳຄັນສຳລັບຊຸມຊົນທີ່ມີໂຄງການສ່ວນໃຫຍ່. ເຄື່ອງມືເກັບກຳຂໍ້ມູນເຊັ່ນ **CNRM** ແລະ **CHIA** ຊ່ວຍໃຫ້ຊຸມຊົນເກັບກຳຂໍ້ມູນຂອງພວກເຂົາເອງໄດ້ ແລະ ຍັງສາມາດຊ່ວຍໃຫ້ຊຸມຊົນກຳນົດຂໍ້ມູນທີ່ພວກເຂົາຍັງຕ້ອງການເຂົ້າເຖິງກ່ຽວກັບໂຄງການ, ອັນຕະລາຍທີ່ອາດຈະເກີດຂຶ້ນ, ແມ່ນໃຜເປັນຜູ້ທີ່ກ່ຽວຂ້ອງ ແລະ ພາລະໜ້າທີ່ຂອງຜູ້ດຳເນີນການແຕ່ລະຄົນ. ແບບຝຶກຫັດໃນການສ້າງແຜນທີ່ທີ່ຊ່ວຍເສີມເຄື່ອງມື LEAD ສາມາດຊ່ວຍໃນການລະບຸຕຳແໜ່ງ ແລະ ຈາກໃຜທີ່ຈະຊອກຫາ ແລະ ຕ້ອງການຂໍ້ມູນນັ້ນ.

**ສິດໃນການມີສ່ວນຮ່ວມ.** ສິດໃນການມີສ່ວນຮ່ວມ ແມ່ນເປັນຈຸດໃຈກາງຂອງການປົກປ້ອງສິດທີ່ສຳຄັນ. ຄວາມຕ້ອງການສຳລັບການດຳເນີນການຕ່າງໆເຊັ່ນ: "ການມີສ່ວນຮ່ວມຢ່າງມີຄວາມໝາຍ," ການປຶກສາຫາລື ແລະ ການຍິນຍອມເຫັນດີໂດຍບໍ່ເສຍຄ່າ, ລ່ວງໜ້າ ແລະ ມີການແຈ້ງຄວາມຍິນຍອມໃນກໍລະນີຂອງຊຸມຊົນຊົນເຜົ່າພື້ນເມືອງໃຫ້ເປັນເວທີສຳລັບຊຸມຊົນໃນການໃຫ້ຂໍ້ມູນ, ແຈ້ງຄວາມກັງວົນ ແລະ ສະເໜີວິທີການແກ້ໄຂ ແລະ ຫາທາງເລືອກອື່ນໆຂອງພວກເຂົາ. ກິດຈະກຳການມີສ່ວນຮ່ວມທີ່ມີປະສິດທິພາບອາດມີອິດທິພົນຕໍ່ໂຄງການເພື່ອຮັບປະກັນວ່າການດຳເນີນຕໍ່ໄປໃນຕໍ່ໜ້າຈະມີລັກສະນະທີ່ຫຼີກລ່ຽງ ຫຼື ຫຼຸດຜ່ອນອັນຕະລາຍຕໍ່ຊຸມຊົນໃຫ້ນ້ອຍທີ່ສຸດ. ໃນບາງກໍລະນີ, ອາດຈະສາມາດຢຸດເຊົາໂຄງການທີ່ເປັນອັນຕະລາຍໄດ້. ເຄື່ອງມືຂອງ LEAD ທັງໝົດສາມາດຊ່ວຍຊຸມຊົນໄດ້ໃຊ້ສິດໃນການມີສ່ວນຮ່ວມໄດ້. ຂະບວນການ **CEWEIA** ແມ່ນມີການເຊື່ອມໂຍງຢ່າງໃກ້ຊິດທີ່ສຸດ, ຍ້ອນວ່າແນໃສ່ການມີສ່ວນຮ່ວມໂດຍສະເພາະ. ການນຳໃຊ້ຜົນໄດ້ຮັບຈາກກິດຈະກຳການເກັບກຳຂໍ້ມູນເຊັ່ນ **CNRM** ແລະ **CHIA**, ບ່ອນທີ່ຊຸມຊົນບັນທຶກສະພາບແວດລ້ອມ ແລະ ຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການໃນຊຸມຊົນ, ເຮັດໃຫ້ຈຸດຢືນຂອງພວກເຂົາມີຄວາມເຂັ້ມແຂງຂຶ້ນໃນຂະນະທີ່ມີສ່ວນຮ່ວມໃນ **CEWEIA.** ໃນຂະນະທີ່ການອອກແບບ ແລະ ສົ່ງເສີມປຸກລະດົມສຳລັບກິດຈະກຳ **CD-OGM**, ຊຸມຊົນກໍສາມາດໃຊ້ສິດໃນການມີສ່ວນຮ່ວມໄດ້.

**ສິດໃນການໄດ້ຮັບການແກ້ໄຂຢຽວຢາ.** ສິດໃນການໄດ້ຮັບການແກ້ໄຂຢຽວຢາ ແມ່ນມີຄວາມສຳຄັນຕໍ່ການໃຫ້ຄວາມໝາຍເຖິງສິດທິມະນຸດ. ເມື່ອໃດທີ່ໂຄງການສ້າງຄວາມເສຍຫາຍ ແລະ ລະເມີດເຖິງສິດທິມະນຸດ, ຊຸມຊົນມີສິດ ໄດ້ຮັບການແກ້ໄຂຢຽວຢາ. ສິດເຫຼົ່ານີ້ ຮວມມີທັງການເຂົ້າເຖິງກົນໄກການໄດ້ຮັບການແກ້ໄຂຢຽວຢາທີ່ມີປະສິດທິພາບ ແລະ ການໄດ້ຮັບການແກ້ໄຂຢຽວຢາທີ່ສຳຄັນພຽງພໍ. ການພັດທະນາ **CD-OGM** ຊ່ວຍໃຫ້ສາມາດໃຊ້ສິດນີ້ໄດ້ໂດຍຊີ້ແຈງໃຫ້ຊັດເຈນວ່າ ຂະບວນການໄດ້ຮັບການແກ້ໄຂຢຽວຢາໃນທ້ອງຖິ່ນທີ່ຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການແກ້ໄຂຢຽວຢາທີ່ຍຸດຕິທຳຈະມີລັກສະນະແນວໃດ ແລະ ຫຼັງຈາກນັ້ນພະຍາຍາມດຳເນີນການຕາມຂັ້ນຕອນນັ້ນໆ. ກິດຈະກຳເສີມອື່ນໆໃນກອບການດຳເນີນງານຂອງ LEAD, ເຊັ່ນ: ກິດຈະກຳສ້າງແຜນທີ່ ແລະ ຍຸດທະສາດທາງດ້ານກົດໝາຍ ແລະ ເຄິ່ງກົດໝາຍ, ສາມາດເສີມສ້າງສິດໃນການໄດ້ຮັບການແກ້ໄຂຢຽວຢາໄດ້ເຊັ່ນດຽວກັນ ໂດຍການກຳນົດທາງເລືອກໃນການແກ້ໄຂທີ່ກ່ຽວຂ້ອງທັງໝົດ ແລະ ເຮັດການຕັດສິນໃຈແບບຍຸດທະສາດວ່າ ຈະນຳໃຊ້ຂໍ້ໃດ. ສິ່ງທີ່ສຳຄັນຄື, ການເຂົ້າຮ່ວມໃນ **CD-OGM** ບໍ່ຄວນຂັດຂວາງການເຂົ້າເຖິງກົນໄກອື່ນໆເຫຼົ່ານີ້.

# 4. ການນຳໃຊ້ກອບການດຳເນີນງານນີ້

ກອບການດຳເນີນງານຂອງ LEAD ມີຈຸດປະສົງເພື່ອໃຫ້ມີຄວາມຄ່ອງໂຕ ແລະ ດັດປັບໃຫ້ເຂົ້າກັບສະພາບການຂອງແຕ່ລະຊຸມຊົນໄດ້. ມັນຈະເປັນປະໂຫຍດຖ້າເລີ່ມຕົ້ນໂດຍການພິຈາລະນາປັດໃຈເບື້ອງຕົ້ນບາງຢ່າງກ່ຽວກັບຄວາມສຳພັນຂອງທ່ານກັບຊຸມຊົນ ແລະ ຄວາມສາມາດໃນປັດຈຸບັນຂອງຊຸມຊົນ, ຄວາມຮູ້ກ່ຽວກັບໂຄງການ, ເປົ້າໝາຍ ແລະ ການສະໜັບສະໜູນທີ່ຕ້ອງການ.

ຖ້າທ່ານບໍ່ເຄີຍໄດ້ເຮັດວຽກກັບຊຸມຊົນນີ້ມາກ່ອນ ຫຼື ຖ້າມີບັນຫາເລື່ອງຄວາມເຊື່ອໝັ້ນກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ອົງການຈັດຕັ້ງທາງສັງຄົມ (CSOs), ທ່ານອາດຈະຕ້ອງສ້າງ ແລະ/ຫຼື ຮັດແໜ້ນຄວາມສຳພັນກັບຊຸມຊົນນັ້ນ. ຖ້າຈຸດສົນໃຈຫຼັກ ຄື ການສ້າງຄວາມສາມັກຄີ, ຄວາມເປັນຜູ້ນຳ ແລະ ຄວາມສົນໃຈຂອງຊຸມຊົນ ຫຼື ເພື່ອສະໜັບສະໜູນພວກເຂົາໃຫ້ເຂົ້າໃຈໂຄງການໄດ້ດີຂຶ້ນ, ຜົນກະທົບທີ່ອາດຈະສົ່ງຜົນຕໍ່ພວກເຂົາໄດ້ແນວໃດ ແລະ ສິດທີ່ພວກເຂົາມີ, ການເລີ່ມຕົ້ນດ້ວຍກິດຈະກຳຕ່າງໆເພື່ອສ້າງຊຸມຊົນນັ້ນມັນອາດຈະເປັນປະໂຫຍດກໍໄດ້ (ເບິ່ງໃນຂໍ້ທີ 2.3). ຖ້າຫາກທ່ານມີຄວາມສຳພັນກັບຊຸມຊົນນັ້ນຢູ່ແລ້ວ ແລະ ພວກເຂົາມີຄວາມເຂົ້າໃຈກ່ຽວກັບໂຄງການ ແລະ ເປົ້າໝາຍໂດຍລວມສະເພາະຂອງພວກເຂົາ, ຫຼັງຈາກນັ້ນທ່ານກໍສາມາດເຮັດວຽກຮ່ວມກັນເພື່ອກຳນົດເປົ້າໝາຍສະເພາະຂອງພວກເຂົາ ແລະ ເລີ່ມຕົ້ນດ້ວຍການສ້າງການໂຄສະນາເຜີຍແຜ່ (ແຄມເປນ) (ເບິ່ງໃນຂໍ້ທີ 2.4).

ທ່ານໄດ້ຊ່ວຍອຳນວຍຄວາມສະດວກໃນການຕັດສິນໃຈຮ່ວມກັບຊຸມຊົນກ່ຽວກັບເຄື່ອງມືທີ່ຈະນຳໃຊ້, ໂດຍອີງໃສ່ບູລິມະສິດ ແລະ ເປົ້າໝາຍຂອງພວກເຂົາ. ເຄື່ອງມືສະເພາະອາດຈະມີຄວາມກ່ຽວຂ້ອງຫຼາຍ ຫຼື ໜ້ອຍໃນຊ່ວງເວລາທີ່ແຕກຕ່າງກັນ, ເນື່ອງຈາກເປົ້າໝາຍຂອງຊຸມຊົນມີການປ່ຽນແປງ ແລະ/ຫຼື ສະຖານະຂອງໂຄງການກໍປ່ຽນໄປ. ເຄື່ອງມືຕ່າງໆແມ່ນສາມາດຊ່ວຍສົ່ງເສີມເຊິ່ງກັນແລະກັນ, ແລະ ກໍສາມາດຊ່ວຍສ້າງເຊິ່ງກັນແລະກັນໄດ້. ຍົກຕົວຢ່າງ, ການດຳເນີນການເຄື່ອງມື **CNRM** ສາມາດສະໜອງຂໍ້ມູນພື້ນຖານທີ່ສາມາດນຳໃຊ້ສຳລັບການວັດແທກຜົນກະທົບທີ່ອາດເກີດຂຶ້ນ, ເຊັ່ນດຽວກັນກັບໃນເຄື່ອງມື **CHIA.** ຜົນໄດ້ຮັບຂອງທັງເຄື່ອງມື **CNRM** ແລະ **CHIA** ສາມາດຖືກນຳໃຊ້ໃນລະຫວ່າງຂະບວນການ **CEWEIA**, ເຊັ່ນດຽວກັນກັບເມື່ອມີການພັດທະນາ **CD-OGM.** ຂະບວນການ **CEWEIA** ສາມາດສະແດງຫຼັກຖານ ໃນການຊອກຫາການໄດ້ຮັບການແກ້ໄຂຢຽວຢາ ຖ້າຫາກວ່າບໍ່ປະຕິບັດຕາມຄຳແນະນຳຈາກຊຸມຊົນໃນລະຫວ່າງການດຳເນີນຂະບວນການດັ່ງກ່າວ ແລະໄດ້ມີຜົນກະທົບເກີດຂຶ້ນ. ການພັດທະນາ **CD-OGM** ຍັງສາມາດໃຫ້ປະໂຫຍດໃນການເຈລະຈາຕໍ່ລອງລະຫວ່າງການປຶກສາຫາລືໄດ້ (ມັກຈະຢູ່ໃນຂັ້ນຕອນ EIA), ບ່ອນທີ່ຊຸມຊົນສາມາດກຳນົດເງື່ອນໄຂການຍອມຮັບໂຄງການຂອງບໍລິສັດທີ່ເຫັນດີຕົກລົງກັບ **CD-OGM.**





EarthRights International